# ກອງທຶນປົກປັກຮັກສາສິ່ງແວດລ້ອມ
## Environment Protection Fund

ກັນຍາ
**2018**

# ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020

## Fundraising and Communication Action Plan



**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກອງທຶນປົກປັກຮັກສາສິ່ງແວດລ້ອມ
# ສະພາບໍລິຫານ

# ແຜນການລະດົມທຶນ ແລະ ການສື່ສານ
# ຮອດປີ 2020
# ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ

ນະຄອນຫຼວງວຽງຈັນ, ກັນຍາ, 2018

# ຄຳເຫັນ



ໃນການຈັດຕັ້ງຜັນຂະຫຍາຍ ວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ໃຫ້ປະກົດຜົນເປັນຈິງ ແນໃສ່ຮັບປະກັນທຶນຮອນ ໃນການປະກອບສ່ວນ ເຂົ້າໃນການຈັດຕັ້ງປະຕິບັດ ເປົ້າໝາຍສູ້ຊົນຕົ້ນຕໍ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ຄາດໝາຍສູ້ຊົນ ຂອງແຜນການ 5 ປີ (2016-2020) ຂອງ ຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງຂອງຂະແໜງ ການອື່ນໆ ທີ່ກ່ຽວຂ້ອງນັ້ນ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ພັດທະນາ ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020 ຂອງຕົນ ເພື່ອຮັບປະກັນ ການສະໜອງທຶນ ໃຫ້ໄດ້ 5-6 ເທົ່າຕົວ ຕາມແຜນການສະໜອງທຶນ ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດແຜນການ ດັ່ງກ່າວ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ກປສ ຈະເພີ່ມທະວີການສ້າງຄວາມເຂັ້ມແຂງ ໃນວຽກງານຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບທຸກຂະແໜງການທີ່ກ່ຽວຂ້ອງ, ຜູ້ມີສ່ວນຮ່ວມ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສັງຄົມ ແລະ ສາກົນ, ບັນດາຜູ້ໃຫ້ທຶນ ແລະ ຜູ້ຮັບຜົນປະໂຫຍດ.

ທ້າຍສຸດນີ້, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຂອບໃຈ ມາຍັງທຸກພາກສ່ວນ ທີ່ມີສ່ວນຮ່ວມທັງໝົດ ພິເສດ ຂໍສະແດງຄວາມຂອບໃຈມາຍັງກຳມະການໃນສະພາບໍລິຫານ ກປສ, ຄະນະວິຊາການ, ພະນັກງານຫ້ອງການ ກປສ, ທະນາຄານໂລກ, ຄູ່ຮ່ວມພັດທະນາ ແລະ ທຸກການປະກອບສ່ວນຂອງທຸກຂະແໜງການ ໃນການສ້າງ ແລະ ສືບຕໍ່ໃຫ້ການສະໜັບສະໜູນ ໃນການຈັດຕັ້ງປະຕິບັດແຜນການລະດົມທຶນ ແລະ ການສື່ສານ ສະບັບນີ້ ໃຫ້ປະກົດຜົນເປັນຈິງ.

ນະຄອນຫຼວງວຽງຈັນ, _________ 2018

ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,

ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ.

ສົມມາດ ພົລເສນາ

## ສາລະບານ


*ພາກທີ I ຜົນການລະດົມທຶນ ແລະ ການສື່ສານ ຂອງ ກປສ ແຕ່ປີ2011-2017* ........ *1*

1.1 ລາຍຮັບ ........ 1

1.1.1. ການຊ່ວຍເຫຼືອ ແລະ ການກູ້ຢືມຕ່າງປະເທດ ........ 1

1.1.2 ການປະກອບສ່ວນຕາມພັນທະຕາມສັນຍາລະຫວ່າງລັດຖະບານແຫ່ງ ສປປ ລາວ ກັບ ໂຄງການລົງທຶນ........ 2

1.1.3 ງົບປະມານຂອງລັດ ........ 2

1.1.4 ລາຍຮັບຈາກຕົ້ນທຶນ ........ 2

1.2 ຜົນການເຄື່ອນໄຫວ ວຽກງານສື່ສານ ໃນໄລຍະຜ່ານມາ 2011-2017 ........ 3

1.2.1 ການສື່ສານ ຜ່ານໜັງສືພິມ ........ 3

1.2.2 ການສື່ສານ ຜ່ານລາຍການວິທະຍຸ ........ 3

1.2.3 ການສື່ສານ ຜ່ານລາຍການໂທລະພາບ ........ 4

1.2.4 ການສື່ສານຜ່ານ ເວັບໄຊ ແລະ ເຟສບຸກ ........ 4

1.2.5 ການສື່ສານ ຜ່ານວາລະສານ ແລະ ສື່ສິ່ງພິມຕ່າງໆ ........ 4

1.2.6 ການສື່ສານ ຜ່ານການວາງສະແດງ ແລະ ອື່ນໆ: ........ 5

1.2.7 ການສື່ສານ ຜ່ານຂະບວນການສຶກສາ ແລະ ການປູກຈິດສຳນຶກ ........ 5

1.3 ການຮ່ວມມື ແລະ ທັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ........ 5

1.4 ສະຫຼຸບຕີລາຄາ........ 5

1.4.1 ດ້ານຕັ້ງໜ້າ........ 5

1.4.2 ຂໍ້ຄົງຄ້າງ ........ 6

1.4.3 ບົດຮຽນຖອດຖອນໄດ້........ 6

*ພາກທີ II ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020* ........ *7*

2.1 ທິດທາງລວມ........ 7

2.2 ຄາດໝາຍສູ້ຊົນ ........ 7

2.3 ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020........ 7

2.4 ວຽກບູລິມະສິດ ດ້ານການສ້າງລາຍຮັບຂອງ ກປສ ........ 7

2.4.1 ແຫຼ່ງລາຍຮັບທີ 1: ງົບປະມານຂອງລັດ........ 8

2.4.2 ແຫຼ່ງລາຍຮັບທີ 2: ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງ ແວດລ້ອມ ຕາມສັນຍາລະຫວ່າງ ລັດຖະບານ ແຫ່ງ ສປສ ລາວ ກັບ ໂຄງການລົງທຶນຕ່າງໆ ( ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານ,ກະສິກຳ-ປ່າໄມ້, ອຸດສະຫະກຳ-ການຄ້າ) ........ 8

2.4.3 ແຫຼ່ງລາຍຮັບທີ 3: ການຊ່ວຍເຫຼືອ ຈາກອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງ ປະເທດ........................12
2.4.4 ແຫຼ່ງລາຍຮັບທີ 4: ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.............................13
2.4.5 ແຫຼ່ງລາຍຮັບທີ 5: ດອກເບ້ຍ ແລະ ຜົນກຳໄລ ທີ່ເກີດຈາກການລົງທຶນ ຂອງ ກປສ ເອງ......................13
2.4.6 ແຫຼ່ງລາຍຮັບ 6: ຄ່າບູລະນະຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ....................................................................................................14
2.4.7 ແຫຼ່ງລາຍຮັບ 7: ຄ່າບໍລິການລະບົບນິເວດ...............................................................................14
2.4.8 ແຫຼ່ງລາຍຮັບ 8: ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ...............................15
2.5 ແຜນບູລິມະສິດ ດ້ານການສື່ສານ ກ່ຽວກັບ ຜົນສຳເລັດ ໃນການເຄື່ອນໄຫວ ຂອງ ກປສ..................18
2.6 ແຜນບູລິມະສິດດ້ານການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ ................20
*ພາກທີ III ມາດຕະການຈັດຕັ້ງປະຕິບັດ* ---------- *20*

ແຜນການລະດົມທຶນ ແລະ ການສື່ສານ ຮອບປີ 2020 ໄດ້ພັດທະນາຂຶ້ນ ເພື່ອຈັດຕັ້ງປະຕິບັດ ວິໄສທັດ 2030 ຂອງ ກປສ ***"ກປສ ເປັນສະຖາບັນການເງິນ ທີ່ເຂັ້ມແຂງ, ມີພະນັກງານ ທີ່ມີປະສົບການສູງ ເປັນທີ່ຍອມຮັບໄດ້ ທັງພາຍໃນ ແລະ ສາກົນ, ມີກົນໄກຄຸ້ມຄອງ ດ້ານການເງິນ ແລະ ສະໜອງທຶນ ທີ່ມີປະສິດທິຜົນ ແລະ ແບບຍືນຍົງ ເຂົ້າໃນວຽກງານ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ"***,ໂດຍສະເພາະ ມີຈຸດສຸມ ຈັດຕັ້ງປະຕິບັດ ເປົ້າໝາຍສະເພາະ 2: ***"ມີແຫຼ່ງລາຍຮັບທີ່ຍືນຍົງ ແລະ ເຊື່ອມໂຍງກັບ ເຄືອຂ່າຍໃນລະດັບຊາດ, ອະນຸພາກພື້ນ ແລະ ສາກົນ"*** ແລະ ຈັດຕັ້ງປະຕິບດ ຍຸດທະສາດ ທີ 2 ແລະ 3 ຂອງຍຸດທະສາດ ຮອບປີ 2025 ຂອງ ກປສ ຄື: ປັບປຸງ ກົນໄກລະດົມທຶນ ແລະ ສະໜອງທຶນ ຂອງ ກປສ ທີ່ຍືນຍົງ ແລະ ປັບປຸງຂອດການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ ຕິດພັນກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ປີ 2012, ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ປີ 2017 ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

**ແຜນການລະດົມທຶນ ແລະ ການສື່ສານ ຮອບປີ 2020 ປະກອບດ້ວຍ 2 ພາກໃຫຍ່ ດັ່ງນີ້:**

1. ຜົນການລະດົມທຶນ ແລະ ການສື່ສານ ຂອງ ກປສ ແຕ່ປີ ( 2011-2017)
2. ແຜນການລະດົມທຶນ ແລະ ການສື່ສານ ຮອບປີ 2020 ຂອງ ກປສ

---

## *ພາກທີ I ຜົນການລະດົມທຶນ ແລະ ການສື່ສານ ຂອງ ກປສ ແຕ່ປີ 2011-2017*

ໃນການສະຫຼຸບຜົນຂອງວຽກງານການລະດົມທຶນ ແລະ ການສື່ສານ ແມ່ນບໍ່ເປັນລະບົບ ຕາມໂຄງສ້າງ ຂອງແຜນດຳເນີນງານ ຍ້ອນໃນຊຸມປີຜ່ານມາ ບໍ່ໄດ້ຮ່າງແຜນການປີ ຄືດັ່ງກ່າວນີ້ ຈຶ່ງບໍ່ໄດ້ວາງທິດທາງລວມ, ຄາດໝາຍສູ້ຊົນ ແລະ ແຜນບູລິມະສິດຢ່າງຄັກແນ່. ດັ່ງນັ້ນ, ການລາຍງານ ແມ່ນໃນຮູບການສະຫຼຸບສັງລວມ ດັ່ງນີ້:

### 1.1 ລາຍຮັບ

ນອກຈາກລາຍຮັບຈາກຕົ້ນທຶນແລ້ວ, ກປສ ໄດ້ພະຍາຍາມຫາທຶນເພີ່ມຈາກ 3 ແຫຼ່ງຕົ້ນຕໍຄື: ເງິນກູ້ຢືມ ຫຼື ຊ່ວຍເຫຼືອລ້າຈາກຕ່າງປະເທດ, ທຶນປະກອບສ່ວນຈາກຜູ້ລົງທຶນ ແລະ ງົບປະມານລັດ ຊຶ່ງໄດ້ຮັບຜົນດັ່ງຕໍ່ໄປນີ້:

#### 1.1.1. ການຊ່ວຍເຫຼືອ ແລະ ການກູ້ຢືມຕ່າງປະເທດ

- ທຶນກູ້ຢືມຈາກທະນາຄານພັດທະນາອາຊີຂອງລັດຖະບານ ໃຫ້ ກປສ 5.7 ລ້ານໂດລາສະຫະລັດ ຊຶ່ງ ກປສ ໄດ້ນຳໄປຫາລາຍໄດ້ຈາກການຝາກເອົາດອກເບ້ຍ;
- ທຶນຮອນເພີ່ມໃຫ້ແກ່ ຄສລ ຈາກທະນາຄານໂລກ ໃນຈຳນວນ 3 ລ້ານໂດລາ ຫຼື ປະມານ 24,000 ລ້ານກີບ, ໃນຊ່ວງ 2010-2013 ເພື່ອລົງເລິກກິດຈະກຳຂອງ ຄສລ ໂດຍພັນຂະຫຍາຍບົດຮຽນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດ ຄສລ. ທຶນເພີ່ມດັ່ງກ່າວ ໄດ້ນຳໃຊ້ໃນກອງທຶນຍ່ອຍນະໂຍບາຍ ແລະ ກອງທຶນຍ່ອຍຊີວະນາໆພັນ;

- ທຶນຊ່ວຍເຫຼືອລ້າ ໃຫ້ກປສ ເພື່ອຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມ ແລະ ສັງຄົມ ໃນຈຳນວນ 4 ລ້ານໂດລາສະຫະລັດ ສຳລັບໄລຍະ 2006-2010, 3 ລ້ານໂດລາສະຫະລັດ 2010-2013 ແລະ 38.8 ລ້ານໂດລາສະຫະລັດ ສຳລັບ 2014-2021.

### 1.1.2 ການປະກອບສ່ວນຕາມພັນທະຕາມສັນຍາລະຫວ່າງລັດຖະບານແຫ່ງ ສປປ ລາວ ກັບ ໂຄງການລົງທຶນ

- ການປະກອບສ່ວນ ຂອງຂົງເຂດພະລັງງານ ຕາມນະໂຍບາຍໄຟຟ້ານ້ຳຕົກແບບຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອອກໃນວັນທີ 7/6/2005 (ນະໂຍບາຍທີ່ມາແທນ) ຫຼື ນິຕິກຳອື່ນໆທີ່ກ່ຽວຂ້ອງ, ຊຶ່ງໃນໄລຍະ ປີ 2011-2017 ກປສ ສາມາດລະດົມໄດ້ 5,8 ຕື້ກີບ ( 700,000 ໂດລາສະຫະລັດ) ມີຄື: ໂຄງການໄຟຟ້ານ້ຳຕົກເທີນຫີນບູນພາກຂະຫຍາຍ 1,6 ຕື້ກີບຕໍ່ປີ (200,000 ໂດລາສະຫະລັດ/ປີ) ເລີ່ມປີ 2014, ໂຄງການນ້ຳງຽບ 1 ປີລະ 45,000 ໂດລາສະຫະລັດ ສຳລັບໄລຍະກໍ່ສ້າງ 4 ປີ ລວມໄດ້ 1,4 ຕື້ກີບ (180,000 ໂດລາສະຫະລັດ) ເລີ່ມແຕ່ປີ 2015, ໄຟຟ້າຫົງສາ ປີລະ 2,4 ຕື້ (300,000 ໂດລາສະຫະລັດ) ເລີ່ມປີ 2017;
- ການປະກອບສ່ວນຂອງໂຄງການລົງທຶນໃນຂົງເຂດບໍ່ແຮ່ ແລະ ທໍລະນີສາດ ຕາມສັນຍາລະຫວ່າງລັດຖະບານ ແຫ່ງ ສ ປປ ລາວ ກັບ ໂຄງການລົງທຶນ, ໃນໄລຍະ ປີ 2011-2017 ລະດົມໄດ້ ຈາກໂຄງການຊອກຄົ້ນ ແລະ ສຳຫຼວດ ແມ່ນ 4,7 ຕື້ກີບ (571,280 ໂດລາສະຫະລັດ), ຈາກໂຄງການຂຸດຄົ້ນ,ປຸງແຕ່ງ ແລະ ກໍ່ສ້າງ ແມ່ນ 3,2 ຕື້ກີບ (389,240 ໂດລາສະຫະລັດ);
- ນອກຈາກ 2 ຂະແໜງການຍ່ອຍໄຟຟ້ານ້ຳຕົກ ແລະ ບໍ່ແຮ່ ແລ້ວ, ຍັງບໍ່ທັນໄດ້ທຶນປະກອບສ່ວນ ຈາກຂະແໜງການຍ່ອຍອື່ນໆໃດເລີຍ.

### 1.1.3 ງົບປະມານຂອງລັດ

- ເຖິງບໍ່ໄດ້ໃຫ້ງົບປະມານໂດຍກົງກໍ່ດີ, ລັດຖະບານ ໄດ້ຮັບຜິດຊອບໃນການຈ່າຍດອກເບ້ຍ ແລະ ຕົ້ນທຶນໃຫ້ທະນາຄານພັດທະນາອາຊີ ແລະ ໄດ້ຊອກຫາທຶນມາໃຫ້ ກປສ ຈັດຕັ້ງປະຕິບັດຕື່ມ ຈາກທະນາຄານໂລກ. ທຶນທີ່ໄດ້ໃໝ່ນີ້ແມ່ນລັດຖະບານເປັນຜູ້ຮັບຜິດຊອບໃນການໃຊ້ຄືນ ລວມທັງດອກເບ້ຍທີ່ຕົກລົງເຫັນດີນຳກັນ ແລະ ທຶນ ດັ່ງກ່າວນີ້ເຮັດໃຫ້ ກປສ ສາມາດເຄື່ອນໄຫວກວ້າງຂວາງຕື່ມຂຶ້ນກວ່າເກົ່າ ແລະ ຍາວໄປເຖິງ 2021;
- ສ່ວນລາຍຮັບຂອງໂຄງການນ້ຳເທີນ 2 ກໍ່ໄດ້ສ້າງກົນໄກໃໝ່ຕ່າງຫາກຂຶ້ນ, ບໍ່ໄດ້ໃຊ້ກົນໄກ ກປສ;
- ຢ່າງໃດກໍ່ດີ, ເພື່ອເຮັດໃຫ້ການເຄື່ອນໄຫວກວ້າງຂວາງອອກຕື່ມ, ສະພາບໍລິຫານ ໄດ້ເຫັນດີແບ່ງເອົາ 700,000ໂດລາສະຫະລັດ ຫຼື ປະມານ 5,600 ລ້ານກີບ ໄປເປັນບ້ວງເງິນກູ້.

### 1.1.4 ລາຍຮັບຈາກຕົ້ນທຶນ

ເມື່ອການສ້າງລາຍຮັບຂອງ ກປສ ໄດ້ພຽງແຕ່ເອົາຕົ້ນທຶນໄປຝາກໄວ້ທະນາຄານ ຊຶ່ງໃນໄລຍະ 2011-2017 ກປສ ໄດ້ຮັບດອກເບ້ຍ 4,9ຕື້ກີບ (590,000 ໂດລາສະຫະລັດ) , ແລະ ເພື່ອເຮັດໃຫ້ການເຄື່ອນໄຫວຂອງ ກປສ ກວ້າງຂວາງຕື່ມ, ກປສ ໄດ້ເອົາທຶນປະມານ 5,600 ລ້ານກີບ (700,000 ໂດລາສະຫະລັດ) ໄປເປັນທຶນກູ້ຢືມດອກເບ້ຍຕ່ຳ ໂດຍແມ່ນພາກສ່ວນເອກະຊົນ ແລະ ຊຸມຊົນມີສິດຂໍຢືມທຶນນີ້ ເຊິ່ງໄລຍະຜ່ານມາ ໄດ້ຮັບດອກເບ້ຍກູ້ຢືມ 130ລ້ານກີບ (15,662ໂດ

ລາສະຫະລັດ). ອັນນີ້ ໄດ້ເຮັດໃຫ້ລາຍຮັບຫຼຸດລົງໜ້ອຍໜຶ່ງ ແຕ່ເຮັດໃຫ້ທຶນຂອງ ກປສ ເພີ່ມມີຜົນຕໍ່ສິ່ງແວດລ້ອມຫຼາຍຂຶ້ນຕື່ມ.

## 1.2 ຜົນການເຄື່ອນໄຫວ ວຽກງານສື່ສານ ໃນໄລຍະຜ່ານມາ 2011-2017

ໃນ 7 ປີຜ່ານມາ, ກປສ ບໍ່ໄດ້ສ້າງແຜນດຳເນີນງານ ດ້ານການສື່ສານ ທີ່ສຸມໃສ່ ການໂຄສະນາເຜີຍແຜ່, ການສະໜອງຂໍ້ມູນຂ່າວສານ ແລະ ປຸກຈິດສຳນຶກ ກ່ຽວກັບ ຜົນສຳເລັດ ໃນການເຄື່ອນໄຫວ ຂອງ ກປສ ເປັນຕົ້ນ ການນຳໃຊ້ ສື່ສິ່ງພິມ, ໂທລະພາບ, ວິທະຍຸ ແລະ ຮູບແບບອື່ນໆ ເພື່ອສະໜອງຂໍ້ມູນຂ່າວສານໃຫ້ແກ່ທຸກພາກສ່ວນ ທີ່ກ່ຽວຂ້ອງ ແລະ ທົ່ວສັງຄົມ ໄດ້ຮັບຊາບ ທີ່ບໍ່ມີລັກສະນະປົກກະຕິ ແລະ ຕໍ່ເນື່ອງ ດັ່ງນີ້:

### 1.2.1 ການສື່ສານ ຜ່ານໜັງສືພິມ

ຈົນຮອດປະຈຸບັນ ກປສ ຍັງບໍ່ໄດ້ຮ່ວມມື ແລະ ເຮັດສັນຍາ ກັບສຳນັກໜັງສືພິມໃດໆ ເຮັດໃຫ້ການອອກຂ່າວໃນໄລຍະຜ່ານມາຖືວ່າອອກຂ່າວ ສະເພາະຫົວຂໍ້ ຫຼື ເຫດການໃດໜຶ່ງທີ່ພົ້ນເດັ່ນເທົ່ານັ້ນ ຊຶ່ງດຳເນີນໄດ້ດ້ວຍການເຊີນຕົວແທນນັກຂ່າວຈາກສຳນັກໜັງສືພິມທີ່ເຫັນວ່າໜ້າເຊື່ອຖື ເຂົ້າຮ່ວມເຫດການ ແລະ ເຂົາເຈົ້າກໍ່ສາມາດລາຍງານຂ່າວຕາມເຫດການໂດຍສ່ວນໃຫຍ່ແມ່ນ ທາງ ກປສ ເອງເປັນຜູ້ແຕ່ງບົດຂ່າວໃຫ້. ສຳນັກໜັງສືພິມທີ່ຄຸ້ນເຄີຍລວມມີ ໜັງສືພິມວຽງຈັນທາມສ໌, ວຽງຈັນໃໝ່, ປະຊາຊົນ ແລະ ໜັງສືພິມປະເທດລາວ.

ເປົ້າໝາຍຜູ້ອ່ານຕົ້ນຕໍ ພະນັກງານຈຳນວນຫຼວງຫລາຍທີ່ສັງກັດລັດ, ເອກະຊົນ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນຜູ້ທີ່ມີເງື່ອນໄຂເຂົ້າເຖິງແຫຼ່ງຂ່າວຈາກໜັງສືພິມຖືວ່າເປັນເປົ້າໝາຍຕົ້ນຕໍ. ໃນນີ້ ກຸ່ມທີ່ເຂົ້າເຖິງ ແລະ ສາມາດເຂົ້າໃຈຂ່າວສານຈາກໜັງສືພິມ ພາສາອັງກິດກໍ່ມີພຽງສ່ວນໜຶ່ງເທົ່ານັ້ນ. ຢ່າງໃດກໍ່ຕາມ, ກປສ ຈຳເປັນຈະຕ້ອງມີຂໍ້ມູນຂ່າວສານ (ທີ່ໃຊ້ໜັງສືພິມ ເປັນສື່) ເປັນສອງພາສາ ເນື່ອງຈາກກຸ່ມຜູ້ໃຫ້ທຶນສ່ວນໃຫຍ່ແມ່ນໃຊ້ພາສາອັງກິດ. ສະພາບການເຂົ້າເຖິງຂໍ້ມູນຂ່າວສານ ຂອງປະຊາຊົນ ໃນ ສປປ ລາວໂດຍລວມແລ້ວແມ່ນມີຄວາມແຕກຕ່າງກັນ ໂດຍສະເພາະລະຫວ່າງປະຊາຊົນທີ່ອາໃສໃນ ຕົວເມືອງ ແລະ ໃນຂອບເຂດຊົນນະບົດ. ໃນເຂດຊົນນະບົດ, ປະຊາຊົນສ່ວນໃຫຍ່ແມ່ນບໍ່ມີໜັງສືພິມອ່ານ.

### 1.2.2 ການສື່ສານ ຜ່ານລາຍການວິທະຍຸ

ລາຍການວິທະຍຸຂອງ ກປສ ກຳລັງຢູ່ໃນຊ່ວງກໍ່ຕົວ ແລະ ພັດທະນາໃຫ້ເປັນຮູບປະທຳ ຊຶ່ງໃນໄລຍະຜ່ານມາ ຂະບວນການເຄື່ອນໄຫວດັ່ງກ່າວ ຍັງຢູ່ໃນຂີດຈຳກັດ. ແຕ່ ກປສ ໄດ້ຕີລາຄາວ່າ ສື່ສານ ຜ່ານລາຍການວິທະຍຸຕ່າງໆ ແມ່ນສາມາດສື່ສານຜົນງານຕ່າງໆ ກ່ຽວກັບ ກປສ ໄປສູ່ທຸກພາກສ່ວນ ຂອງສັງຄົມໄດ້ ລວມທັງປະຊາຊົນບັນດາເຜົ່າທີ່ຢູ່ຫ່າງໄກສອກຫຼີກ ແລະ ກຸ່ມຜູ້ທຸກຍາກ.

ແຜນການ - ຈຸດປະສົງຕົ້ນຕໍແມ່ນແນໃສ່: ຍົກລະດັບພາບລັກ ແລະ ພາລະບົດບາດຂອງ ກປສ ໃຫ້ເປັນທີ່ຮູ້ຈັກຂອງສັງຄົມ, ເຜີຍແຜ່ຜົນງານຂອງ ກປສ ໃຫ້ພາກສ່ວນຕ່າງໆຮັບຊາບ ເຊັ່ນ ພາກລັດ, ເອກະຊົນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລທັງພາຍໃນ ແລະ ສາກົນ, ຜູ້ພັດທະນາໂຄງການ ແລະ ພາກສ່ວນອື່ນໆ ແລະ ປູກຈິດສຳນຶກໃຫ້ກຸ່ມເປົ້າໝາຍ ແລະ ປະຊາຊົນທົ່ວໄປກ່ຽວກັບການສົ່ງເສີມ,ອະນຸລັກສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ

ນອກຈາກນີ້ ກປສ ຍັງມີເປົ້າໝາຍສ້າງລາຍການວິທະຍຸດັ່ງກ່າວໃຫ້ກາຍເປັນສະຖານທີ່ປຶກສາຫາລື ແລະ ສົນທະນາບັນຫາສິ່ງແວດລ້ອມຂອງ ສປປ ລາວ. ເປົ້າໝາຍສູງສຸດ ແມ່ນແນໃສ່ປູກຈິດສຳນຶກໃຫ້ບັນດາບຸກຄົນ ແລະ ກຸ່ມຄົນ ທີ່ຍັງບໍ່

ທັນມີຄວາມຕື່ນຕົວໃນການປະກອບສ່ວນເຂົ້າໃນການດູແລຮັກສາ, ສົ່ງເສີມ ແລະ ຄຸ້ມຄອງຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເຕັມເມັດເຕັມໜ່ວຍ. ເປົ້າໝາຍຫຼັກມີຢູ່ 3 ກຸ່ມຄົນ ຄື: ນັກຮຽນນັກສຶກສາ ແລະ ເຍົາວະຊົນຮຸ່ນຫຼັງ, ພໍ່ຄ້າ ຊາວຂາຍຕາມຕະຫຼາດທົ່ວໄປ, ຊາວກະສິກອນຕາມເມືອງຕ່າງໆ ແລະ ເຂດຊົນນະບົດ ແລະ ພະນັກງານລັດຖະກອນ, ລວມ ທັງການນຳ ແລະ ບັນດາຄູອາຈານ ກໍ່ຄືປັນຍາຊົນໃນຂອບເຂດທົ່ວປະເທດ.

### 1.2.3 ການສື່ສານ ຜ່ານລາຍການໂທລະພາບ

ລາຍການໂທລະພາບມີເປົ້າໝາຍ ເພື່ອສື່ສານເນື້ອໃນລາຍການສິ່ງແວດລ້ອມ ໂດຍກົງໃຫ້ແກ່ຜູ້ຊົມທັງໝົດ ຊຶ່ງໃນ ຜ່ານມາ ກປສ ໄດ້ໃຫ້ການສະໜັບສະໜູນ ລາຍການໂທລະພາບ ເພື່ອສິ່ງແວດລ້ອມ ແນ່ໃສ່ໂຄສະນາເຜີຍແຜ່ ຜົນງານ ການເຄື່ອນໄຫວ ຂອງກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຜີຍແຜ່ ເຫດການສຳຄັນຕ່າງໆ ດ້ານ ສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ, ໃນນັ້ນ ໄດ້ກຳນົດເວລາ ຈຳນວນໜຶ່ງ ເພື່ອໂຄສະນາ ເຜີຍແຜ່ ຜົນງານ ການເຄື່ອນໄຫວ ຂອງ ກປສ ໂດຍມີເນື້ອຫາຕາມຂອບການຈັດລາຍການທີ່ ກປສ ສະໜອງໃຫ້. ລາຍການດັ່ງກ່າວ ໄດ້ດຳ ເນີນການຖ່າຍທອດ 3 ເທື່ອ ຂອງ 30 ນາທີ ໃນແຕ່ລະທິດ ໃນຕອນເຊົ້າວັນເສົາ, ຕອນຄ່ຳວັນອາທິດ ແລະ ຕອນເຊົ້າວັນຈັນ ໂດຍແມ່ນໂທລະພາບ ແຫ່ງຊາດ ຊ່ອງ 3 ເປັນຜູ້ດຳເນີນລາຍການ.

### 1.2.4 ການສື່ສານຜ່ານ ເວັບໄຊ ແລະ ເຟສບຸກ

ໃນ 7 ປີ ຜ່ານມາ ກປສ ໄດ້ສຸມໃສ່ ການພັດທະນາ ເວັບໄຊ ແລະ ເຟສບຸກ ຂອງຕົນ ຢ່າງເປັນເຈົ້າການ ເພື່ອ ຮັບປະກັນ ການໂຄສະນາເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບ ຜົນຜະລິດ, ຜົນງານ ຂອງຕົນ ສະໜອງໃຫ້ແກ່ ທຸກພາກສ່ວນທີ່ກ່ຽວຂ້ອງ ຂອງສັງຄົມ. ເວບໄຊ ຂອງ ກປສ ແມ່ນ www.laoepf.org.la ແລະ ເຟສບຸກ ແມ່ນ: www.facebook.com/LaoEPF ທີ່ຮັບການພັດທະນາ ເປັນຕົ້ນເປັນໂຕ ສາມາດສະໜອງຂໍ້ມູນ-ຂ່າວສານ ຂັ້ນພື້ນຖານ ໃຫ້ແກ່ສັງຄົມ ແລະ ຜູ້ມີສ່ວນຮ່ວມຕ່າງໆ. ແຕ່ຢ່າງໃດກໍ່ດີ, ທັງ ເວບໄຊ ແລະ ເຟສບຸກ ຍັງບໍ່ທັນດຳເນີນ ຢ່າງເປັນປົກກະຕິ ແລະ ມີປະສິດທິຜົນເທື່ອ ຍ້ອນການປ້ອນຂໍ້ມູນ-ຂ່າວສານ ຍັງບໍ່ທັນອຸດົມສົມບູນ, ຂ່າວສານບໍ່ຫຼາກຫຼາຍ, ບໍ່ທັນເປັນລະບົບ ທີ່ປົກກະຕິ ແລະ ຕໍ່ເນື່ອງ.

### 1.2.5 ການສື່ສານ ຜ່ານວາລະສານ ແລະ ສື່ສິ່ງພິມຕ່າງໆ

ໃນ 7 ປີ ຜົນງານທີ່ພົ້ນດີເດັ່ນ ຂອງ ກປສ ກໍ່ແມ່ນການສ້າງວາລະສານ, ແຜ່ນພັບ, ປື້ມຄູ່ມື, ບົດລາຍງານປະຈຳປີ, ປະຕິທິນ ແລະ ອື່ນໆ ເຊິ່ງມີເນື້ອຫາ ແລະ ມີຂໍ້ມູນແຕກຕ່າງກັນຕາມຈຸດປະສົງຂອງແຕ່ລະຢ່າງ ກໍ່ຖືວ່າເປັນເຄື່ອງມືທີ່ສຳຄັນ ແລະ ຈຳເປັນໃນການສື່ສານ. ສື່ສິ່ງພິມເຫຼົ່ານີ້ລ້ວນແຕ່ມີເນື້ອໃນ ແລະ ຈຸດປະສົງທີ່ຕ້ອງການສື່ສານເຖິງຜົນງານຂອງ ກປສ, ລາຍງານກ່ຽວກັບ ສະຖານະພາບຂອງບັນດາໂຄງການທີ່ກຳລັງດຳເນີນຢູ່, ສື່ສານກ່ຽວກັບຄວາມອາດສາມາດຂອງ ກປສ, ບັນດາສິ່ງທ້າທາຍທີ່ກຳລັງປະເຊີນຢູ່, ທິດທາງໃນຕໍ່ໜ້າ ແລະ ອື່ນອີກ. ທັງໝົດນີ້ ລ້ວນແຕ່ມີຄວາມສຳຄັນ ໂດຍສະເພາະໃນ ເວລາຈັດງານວາງສະແດງ, ກອງປະຊຸມເຜີຍແຜ່ ກ່ຽວກັບ ກປສ ແລະ ເນື່ອງໃນໂອກາດງານ ສຳມະນາ ສ້າງຈິດສຳນຶກຕ່າງໆ. ກຸ່ມເປົ້າໝາຍຕົ້ນຕໍລວມມີບັນດານັກຮຽນຮູ້ປັນຍາຊົນທີ່ຮັກການອ່ານ ໂດຍສະເພາະແມ່ນກຸ່ມທີ່ມີຄວາມສົນໃຈ ກ່ຽວກັບ ຫົວຂໍ້ສິ່ງແວດລ້ອມ. ສື່ສິ່ງພິມຕ່າງໆທີ່ກ່າວມາຂ້າງເທິງນັ້ນຈະມີການແຈກຢາຍໃນທຸກໂອກາດທີ່ ເໝາະສົມ ເຊັ່ນ: ເນື່ອງໃນ ງານສຳມະນາ, ກອງປະຊຸມ, ງານວາງສະແດງ ຫຼື ງານສະເຫຼີມສະຫຼອງວັນສຳຄັນຕ່າງໆ. ການແຈກຢາຍສື່ສິ່ງພິມ ແລະ ສື່ສິ່ງ ພິມໃນຮູບແບບນີ້ຈະຊ່ວຍໃຫ້ມວນຊົນ ຫຼື ກຸ່ມເປົ້າໝາຍເຂົ້າໃຈເພີ່ມຕື່ມກ່ຽວກັບຕົວຕົນຂອງ ກປສ ແລະ ສຳຄັນ ໄປກວ່າ ນັ້ນແມ່ນໂອກາດໃນການເພີ່ມຈຳນວນຜູ້ຄົນທີ່ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຜາລະບົດບາດຂອງ ກປສ ໃນ ສປປ ລາວ.

### 1.2.6 ການສື່ສານ ຜ່ານການວາງສະແດງ ແລະ ອື່ນໆ:

ໃນໄລຍະຜ່ານມາ ກິດຈະກຳ ນອກສະຖານທີ່, ກັບຊຸມຊົນ, ໂຮງຮຽນ ແລະ ອື່ນໆ ແມ່ນບໍ່ໄດ້ດຳເນີນ ແລະ ບໍ່ມີແຜນການສຳລັບການເຄື່ອນໄຫວວຽກງານດັ່ງກ່າວ. ກປສ ຮັບຮູ້ດີ ກ່ຽວກັບ ກິດຈະກຳນອກສະຖານທີ່ ມີລັກສະນະພິເສດຄື ສາມາດຈັດເວລາໃດກໍ່ໄດ້ ແລະ ສະຖານທີ່ໃດກໍ່ໄດ້ ອີງໃສ່ກຸ່ມເປົ້າໝາຍ ແລະ ໄດ້ມີການລິເລີ່ມກິດຈະກຳໃດໜຶ່ງແລ້ວ ເຊັ່ນ: ຕາມໂຮງຮຽນ, ຕາມຊຸມຊົນໃດໜຶ່ງ.

### 1.2.7 ການສື່ສານ ຜ່ານຂະບວນການສຶກສາ ແລະ ການປູກຈິດສຳນຶກ

ໃນຜ່ານມາ ກປສ ບໍ່ໄດ້ມີກິດຈະກຳ ເຄື່ອນໄຫວ ໃດໆ ໃນການພັດທະນາຫຼັກສູດການສຶກສາສາມັນ ດ້ານສິ່ງແວດລ້ອມ ສຳລັບປະຖົມ, ມັດທະຍົມ ແລະ ການສຶກສາ ລະດັບວິຊາຊີບ ແລະ ການສຶກສາລະດັບມະຫາວິທະຍາໄລ, ແຕ່ ກປສ ເປັນເຈົ້າການ ໃນການໃຫ້ການສະໜັບສະໜູນທຶນ ຈຳນວນຫຼາຍສົມຄວນ ໃຫ້ແກ່ຂະແໜງ ການທີ່ກ່ຽວຂ້ອງ ເຊັ່ນ: ສະໜັບສະໜູນ 5 ຄະນະ ຂອງມະຫາວິທະຍາໄລແຫ່ງຊາດ ເພື່ອສ້າງບຸກຄະລາກອນດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ສ່ວນປູກຈິດສຳນຶກມວນຊົນທົ່ວໄປ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ, ພາກເອກະຊົນ, ຜູ້ພັດທະນາໂຄງການ ແລະ ອື່ນໆ ແມ່ນຍັງຈຳກັດ ຄືດຳເນີນເປັນບາງຄັ້ງຄາວ.

## 1.3 ການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ

ຜ່ານມາ ກປສ ຍັງບໍ່ໄດ້ມີການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບຂະແໜງການ ທີ່ກ່ຽວຂ້ອງເທົ່າທີ່ຄວນ ເຊັ່ນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເອງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງທີ່ກ່ຽວຂ້ອງອື່ນໆ. ນອກນີ້ ຍັງບໍ່ທັນ ໄດ້ຮັດແໜ້ນສາຍພົວພັນ ກັບອົງການຈັດຕັ້ງສາກົນ ພາຍໃນປະເທດ, ພາກພື້ນ ແລະ ສາກົນ ທີ່ແນໃສ່ສ້າງຄວາມສາມາດດຶງດູດທຶນຮອນໃຫ້ແກ່ ກປສ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ.

ແຕ່ໄດ້ສ້າງສາຍສຳພັນອັນດີ ກັບທະນາຄານໂລກ World Bank (WB), ສາຍສຳພັນກັບທະນາຄານພັດທະນາອາຊີ (ADB), ສາຍສຳພັນກັບ Global Environment Facility (GEF) ແລະ ອົງການຈັດຕັ້ງອື່ນໆອີກ ຊຶ່ງສາມາດດຶງດູດທຶນຮອນ ຈຳນວນຫຼາຍສົມຄວນ ມາສູ່ ກປສ.

## 1.4 ສະຫຼຸບຕີລາຄາ

### 1.4.1 ດ້ານຕັ້ງໜ້າ

ການເຄື່ອນໄຫວວຽກງານ ການລະດົມທຶນ, ການສື່ສານ ແລະ ການຮ່ວມມື ໃນປີ ແມ່ນຂາດແຜນການຮອງຮັບ ແຕ່ກໍ່ໄດ້ດີກວ່າ ການເຄື່ອນໄຫວ ໃນ 5 ປີ ທຳອິດ ຂອງ ກປສ. ກປສ ສາມາດລະດົມທຶນ ຈາກການປະກອບສ່ວນພັນທະ ຕາມສັນຍາລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ໂຄງການລົງທຶນ ປະມານ 2 ລ້ານໂດລາສະຫລັດ ແລະ ການຊ່ວຍເຫຼືອລ້າເພີ່ມເຕີມ ຈາກທະນະຄານໂລກ ຈຳນວນ 3 ລ້ານ ຖືວ່າການສ້າງລາຍຮັບ ໄດ້ລື່ນ ຊຸມ 5 ປີ ທຳອິດ ທີ່ສາມາດສະໜອງທຶນ ໃຫ້ແກ່ການຈັດຕັ້ງປະຕິບັດ ແຜນການສະໜອງທຶນ 5 ປີ ຄັ້ງທີ II (2011-2015) ໄດ້ບັນລຸຄາດໝາຍ ທີ່ວາງໄວ້ເປັນຢ່າງດີ.

ວຽກງານການສື່ສານ ແມ່ນໄດ້ດຳເນີນເປັນປົກກະຕິດີ ໃນຂົງເຂດການສື່ສານ ຜ່ານເວບໄຊ, ເຟສບຸກ, ຜ່ານໂທລະພາບ, ວາລະສານ, ບົດລາຍງານ, ແຜ່ນພັບ ແລະ ສິ່ງພະລິດອື່ນໆ ຂອງ ກປສ ເອງ ແມ່ນໄດ້ດີ ສາມາດສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບ ຜົນງານການເຄື່ອນໄຫວ ຂອງ ກປສ ໄດ້ເປັນສ່ວນໃຫຍ່. ວຽກງານຮ່ວມມື ແມ່ນເຮັດໄດ້ດີ ກັບທະນາຄານໂລກ ແລະ ບາງຂະແໜງການ ທີ່ກ່ຽວຂ້ອງ.

### 1.4.2 ຂໍ້ຄົງຄ້າງ

ນອກຈາກຈຸດດີແລ້ວ ຍັງມີຂໍ້ຄົງຄ້າງ ຈຳນວນໜຶ່ງ ທີ່ຕ້ອງໄດ້ເອົາໃຈໃສ່ແກ້ໄຂ ດັ່ງນີ້:

- ຂາດຍຸດທະສາດ, ແຜນການ ດ້ານການລະດົມທຶນ ແລະ ການສື່ສານ ລວມທັງວຽກງານການຮ່ວມມື;
- ບໍ່ສາມາດລະດົມທຶນໄດ້ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍປົກປັກຮັກສາສິ່ງແວດລ້ອມ ແລະ ດຳລັດວ່າດ້ວຍ ກປສ ແມ່ນບໍ່ໄດ້ຈັດຕັ້ງປະຕິບັດ ຢ່າງມີຈຸດສຸມ;
- ການເກັບລາຍຮັບ ຈາກການປະກອບສ່ວນພັນທະ ຂອງບັນດາໂຄງການພັດທະນາ ບໍ່ໄດ້ຈັດຕັ້ງປະຕິບັດເປັນລະບົບ ແລະ ລາຍຮັບຂອງ ກປສ ແມ່ນຫຼຸດແຜນ ທີ່ຕັ້ງໄວ້;
- ຂາດການຮ່ວມມື ກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ກັບຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ;
- ຜູ້ໃຫ້ທຶນຍັງບໍ່ມີຄວາມເຊື່ອໝັ້ນໃນການຈັດຕັ້ງຂອງ ກປສ

### 1.4.3 ບົດຮຽນຖອດຖອນໄດ້

ບົດຮຽນຫຼັກທີ່ຖອດຖອນໄດ້ ຈາກການເຄື່ອນໄຫວລະດົມທຶນ, ການສື່ສານ ແລະ ການຮ່ວມມື ມີດັ່ງນີ້ :

- ການເຄື່ອນໄຫວ ຕ້ອງບົນພື້ນຖານ ວິໄສທັດ, ຍຸດທະສາດ ແລະ ແຜນດຳເນີນງານ ໃນທຸກໆ 5 ປີ ແລະ ແຜນການຈຸດສຸມ ໃນທຸກໆປີ;
- ເພີ່ມທະວີ ການຫັນເຂົ້າສູ່ລະບົບນິຕິກຳ ຮອງຮັບການເຄື່ອນໄຫວ ແລະ ການບັງຄັບປະຕິບັດພັນທະ ຕາມສັນຍາສຳປະທານ ສຳລັບບັນດາໂຄງການລົງທຶນ ແລະ ກິດຈະການພັດທະນາ ແລະ ການປະຕິບັດພັນທະອື່ນໆ ເຊັ່ນ: ການຈ່າຍຄ່າການບໍລິການລະບົບນິເວດ, ການຊົດເຊີຍດ້ານຊີວະນາໆພັນ, ອາກອນສິ່ງແວດລ້ອມ, ການຈ່າຍຄ່າ ການປ່ອຍມົນລະພິດທາງນໍ້າ ແລະ ການຊຸກຍູ້ການປະກອບສ່ວນອື່ນໆ;
- ເພີ່ມທະວີ ວຽກງານການສື່ສານ ກ່ຽວກັບ ຜົນງານການເຄື່ອນໄຫວ ຂອງ ກປສ ຜ່ານສື່ສານມວນຊົນຕ່າງໆ ເປັນຕົ້ນ: ໜັງສືພິມ, ວິທະຍຸ, ໂທລະພາບ, ວາລະສານ, ແຜ່ນພັບ, ເວບໄຊ, ເຟສບຸກ ແລະ ອື່ນໆ;
- ເພີ່ມທະວີການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ.

# *ພາກທີ II ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020*

## 2.1 ທິດທາງລວມ

ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020 ຂອງ ກປສ ແມ່ນໄດ້ວາງທິດທາງ ເພື່ອຈັດຕັ້ງປະຕິບັດ ທິດທາງລວມ ຂອງຍຸດທະສາດ ກປສ ໃຫ້ປະກົດຜົນເປັນຈິງ ໂດຍໄດ້ສຸມໃສ່ ***"ສ້າງຄວາມເຂັ້ມແຂງ ທາງດ້ານກົນໄກການເງິນ ທີ່ຍືນຍົງ ເພື່ອປະຕິບັດພາລະບົດບາດ ໃນການລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນຢ່າງຕັ້ງໜ້າ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ ໃຫ້ປະກົດຜົນເປັນຈິງ ໄປພ້ອມໆກັບການ ເຊື່ອມໂຍງເຂົ້າກັບ ເຄືອຂ່າຍ ຂອງຜູ້ມີສ່ວນຮ່ວມ ທີ່ກ່ຽວຂ້ອງທັງຫມົດ".***

## 2.2 ຄາດໝາຍສູ້ຊົນ

ຄາດໝາຍສູ້ຊົນ ຂອງ ກປສ ໃນແຕ່ລະດ້ານ ຮອດປີ 2020 ມີດັ່ງນີ້:

1. ***ດ້ານການລະດົມທຶນ*** - ການລະດົມທຶນບັນລຸມູນຄ່າ 391 ຕື້ກີບ (47.1 ລ້ານໂດລາສະຫາລັດ) ແຕ່ນີ້ ຮອດປີ 2020
2. ***ດ້ານການສື່ສານ*** **-** ມີລະບົບການສື່ສານສະໜອງຂໍ້ມູນຂ່າວສານ ຜ່ານສື່ຕ່າງໆ ຢ່າງມີປະສິດທິຜົນ
3. ***ດ້ານການຮ່ວມມື*** **-** ປັບປຸງການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ

## 2.3 ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020

ເພື່ອບັນລຸຄາດໝາຍສູ້ຊົນແຕ່ນີ້ຮອດປີ 2020, ກປສ ໄດ້ວາງແຜນບູລິມະສິດ ດ້ານການລະດົມທຶນ ແລະ ການສື່ສານ ຂອງຕົນ ດັ່ງນີ້:

1. ***ວຽກບູລິມະສິດ 1***: ເພີ່ມທະວີການສ້າງລາຍຮັບຂອງ ກປສ ໃຫ້ໄດ້ທັງໝົດ 8 ແຫຼ່ງ ຕາມດຳລັດຂອງ ກປສ ເລກທີ 094/ລບ, ວັນທີ 08 ມີນາ 2017.
2. ***ວຽກບູລິມະສິດ 2***: ເພີ່ມທະວີ ວຽກງານການສື່ສານ ຜົນສຳເລັດ ໃນການເຄື່ອນໄຫວ ຂອງ ກປສ
3. ***ວຽກບູລິມະສິດ 3***: ປັບປຸງການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ

## 2.4 ວຽກບູລິມະສິດ ດ້ານການສ້າງລາຍຮັບຂອງ ກປສ

ໄດ້ສຸມໃສ່ສ້າງ ແລະ ຈັດຕັ້ງປະຕິບັດ ກົນໄກສ້າງລາຍຮັບ ຕາມມາດຕາ 5 ຂອງດຳລັດ ກປສ ສະບັບປັບປຸງ ຊຶ່ງມີ 8 ແຫຼ່ງລາຍຮັບຕົ້ນຕໍ ຂອງ ກປສ ຄື: ງົບປະມານຂອງລັດ; ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ໂຄງການລົງທຶນຕ່າງໆ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ; ການຊ່ວຍເຫຼືອ ຈາກອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ; ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ; ດອກເບ້ຍ ແລະ ຜົນກຳໄລ ທີ່ເກີດຈາກການລົງທຶນ ຂອງ ກປສ ເອງ, ລວມທັງຈາກຕົ້ນທຶນ ຂອງ ກປສ ທີ່ນຳໄປຝາກໃນທະນະຄານ; ຄ່າບູລະນະຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກໂຄງການ ແລະ ກິດຈະການຕ່າງໆ; ຄ່າບໍລິການລະບົບນິເວດ ແລະ ຄ່າປັບໃໝ ແລະ

ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ ໃຫ້ປະກົດຜົນເປັນຈິງພາຍໃນໄລຍະ 3 ປີ ຮອດປີ 2020 ຊຶ່ງແຜນການດັ່ງກ່າວ ປະກອບມີ 8 ແຫຼ່ງລາຍຮັບ ລະອຽດດັ່ງນີ້:

### 2.4.1 ແຫຼ່ງລາຍຮັບທີ 1: ງົບປະມານຂອງລັດ

ກປສ ໄດ້ຮັບການອະນຸມັດ ສະບັບເລກທີ 6439/ກງ.ຄງຊ ວັນທີ 02 ພະຈິກ 2016 ໃຫ້ສືບຕໍ່ນຳໃຊ້ຕົ້ນທຶນຈາກ ຊ່ວຍເຫຼືອລ້າ ຈາກທະນາຄານພັດທະນາອາຊີ ໄດ້ມອບໃຫ້ລັດຖະບານລາວ ເພື່ອມອບຕໍ່ໃຫ້ ກປສ ໃນຮູບການງົບປະມານ ຂອງລັດ ໃນມູນຄ່າລວມ 47,3 ຕື້ກີບ (5,7 ລ້ານໂດລາສະຫະລັດ) ຊຶ່ງໃນນັ້ນ ໃນມູນຄ່າ 41,5 ຕື້ກີບ (5 ລ້ານໂດລາ ສະຫະລັດ) ໄດ້ຝາກໄວ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ເພື່ອນຳເອົາດອກເບ້ຍດັ່ງກ່າວ ມານຳໃຊ້ເຂົ້າໃນວຽກ ງານຄຸ້ມຄອງ-ບໍລິຫານ ກປສ ແລະ ປະມານ 5,8 ຕື້ກີບ (7 ແສນໂດລາສະຫາລັດ) ໄດ້ນຳໄປສະໜອງເງິນກູ້ ໃຫ້ແກ່ 21 ໂຄງການ ກ່ຽວກັບ ການກຳຈັດຂີ້ເຫຍື້ອ ແລະ ແກ້ໄຂບາງບັນຫາສິ່ງແວດລ້ອມ ທີ່ພົ້ນເດັ່ນ ເພື່ອໃຫ້ເກີດດອຍເບ້ຍ. ຖືໄດ້ວ່າ ມາຮອດປະຈຸບັນ ແຫຼ່ງລາຍຮັບ ຈາກງົບປະມານລັດ ແມ່ນມີພຽງແຕ່ 47,3 ຕື້ກີບ (5,7 ລ້ານໂດລາສະຫະລັດ) ເທົ່ານັ້ນ.

**ວຽກຈຸດສຸມ:**

- ຄຸ້ມຄອງ ແລະ ບໍລິຫານ ການນຳໃຊ້ດອກເບ້ຍຈາກການລົງທຶນດັ່ງກ່າວ ໃຫ້ເກີດປະໂຫຍດສູງສຸດ, ໂປ່ງໃສ ແລະ ມີຈຸດສຸມ;
- ເພີ່ມທະວີການຂຸດຄົ້ນ ທ່າແຮງ ຈາກແຫຼ່ງລາຍຮັບ ງົບປະມານລັດ ດ້ວຍຫຼາຍຮູບການ ໃນສະເພາະໜ້າ ແລະ ຍາວ ນານ ໂດຍປະສານສົມທົບ ກັບ ກະຊວງການເງິນ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ;
- ໃຫ້ການສະໜັບສະໜູນ ວຽກງານຄົ້ນຄວ້າ ບັນດານິຕິກຳ ກ່ຽວກັບ ການສ້າງລາຍຮັບ ເຂົ້າງົບປະມານລັດ ແລະ ຫັກສ່ວນແບ່ງ ໃນນາມງົບປະມານມາສູ່ ກປສ ເຊັ່ນ: ລັດຖະບັນຍັດ ວ່າດ້ວຍອາກອນສິ່ງແວດລ້ອມ, ຄ່າອັດຕາ ການປ່ອຍນ້ຳເປື້ອນ ແລະ ອື່ນໆ.

### 2.4.2 ແຫຼ່ງລາຍຮັບທີ 2: ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາລະຫວ່າງ ລັດຖະບານ ແຫ່ງ ສປສ ລາວ ກັບ ໂຄງການລົງທຶນຕ່າງໆ (ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານ, ກະສິກຳ-ປ່າໄມ້, ອຸດ ສະຫະກຳ-ການຄ້າ)

ການປະກອບສ່ວນປະຕິບັດພັນທະ ຕາມສັນຍາລະຫວ່າງລັດຖະບານ ແຫ່ງ ສປປ ລາວ ກັບ ໂຄງການລົງທຶນ ແມ່ນ ທ່າແຮງຫຼັກ ຂອງການສ້າງລາຍຮັບເຂົ້າ ກປສ ທີ່ຄາດຄະເນໄວ້ ໃຫ້ບັນລຸມູນຄ່າທັງໝົດ 60,4 ຕື້ກີບ (7,2 ລ້ານໂດລາສະ ຫາລັດ) ຈາກການປະຕິບັດພັນທະ ຕາມສັນຍາ ຂອງ 132 ໂຄງການໄຟຟ້ານ້ຳຕົກ, 134 ໂຄງການບໍລິສັດສຳຫຼວດ-ຂຸດຄົ້ນ ແຮ່ທາດ ແລະ 81 ໂຄງການບໍ່ແຮ່, 15 ໂຄງການສາຍສົ່ງ, 10 ໂຄງການໄຟຟ້ານ້ຳຕົກ ຂອງ ບໍລິສັດໄຟຟ້າລາວ ຮອດປີ 2020 ຊຶ່ງໜ້າວຽກຈຸດສຸມ ປະກອບມີ ບັນດາ ກິດຈະກຳລະດົມການປະກອບສ່ວນ ລາຍລະອຽດ ມີດັ່ງນີ້:

#### ກ. ຂົງເຂດພະລັງງານ

ລາຍຮັບ ຈາກການປະກອບສ່ວນປະຕິບັດພັນທະຕາມສັນຍາ ລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ໂຄງການ ລົງທຶນ ແລະ ກິດຈະການພັດທະນາ ດ້ານພະລັງງານ (ພະລັງງານໄຟຟ້ານ້ຳຕົກ, ພະລັງງານຄວາມຮ້ອນຖ່ານຫີນ, ພະລັງງານ ແສງຕາເວັນ ແລະ ອື່ນໆ) ໃນຂະແໜງພະລັງງານ ໃຫ້ບັນລຸ 40,8 ຕື້ກີບ (4,9 ລ້ານໂດລາສະຫະລັດ), ສາມາດແຍກກຸ່ມ ໂຄງການອອກເປັນ 5 ກຸ່ມດັ່ງນີ້:

❖ **<u>ກຸ່ມໂຄງການທີ 1: ແມ່ນບັນດາໂຄງການທີ່ມີສັນຍາ ກັບລັດຖະບານແລ້ວ ແລະ ໄດ້ລະບຸຕົວເລກທີ່ຕ້ອງປະກອບສ່ວນເຂົ້າ ກປສ ຢ່າງຊັດເຈນ:</u>** ໃນກຸ່ມນີ້ ມີທັງໝົດ 19 ໂຄງການ (ລວມທັງໂຄງການພະລັງງານຄວາມຮ້ອນ ຫົງສາ) ແລະ ອີງໃສ່ສັນຍາ ລະຫວ່າງ ລັດຖະບານ ແລະ ໂຄງການລົງທຶນແລ້ວ ເຫັນວ່າພັນທະທີ່ຜູ້ພັດທະນາໂຄງການຕ້ອງປະກອບ ສ່ວນແມ່ນມີ 2 ໄລຍະຄືໄລຍະກໍ່ສ້າງ ແລະ ໄລຍະດໍາເນີນງານ (ໄລຍະຂາຍໄຟຟ້າ).

**<u>ວຽກຈຸດສຸມ:</u>**

- ທ່ານປະທານ ສະພາບໍລິຫານ ກປສ ໄດ້ມີໜັງສື ທາງການ ຫາ ລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 020/ກປສ.ສພ, ລົງວັນທີ 31 ສິງຫາ 2017 ກ່ຽວກັບ ການອອກແຈ້ງການ ທາງການ ໃຫ້ແກ່ 19 ໂຄງການດັ່ງກ່າວ ມາປະຕິບັດພັນທະປະກອບສ່ວນຕາມຕົວເລກທີ່ໄດ້ລະບຸໄວ້ໃນສັນຍາສໍາປະທານຂອງຕົນ ໃຫ້ແກ່ ກປສ ຊຶ່ງຄາດຄະເນລະດົມໄດ້ເຖິງ 28,3 ຕື້ກີບ (3,4 ລ້ານໂດລາສະຫະລັດ) ຮອດປີ 2020;
- ຕິດຕາມເອກະສານດັ່ງກ່າວ;
- ປະສານສົມທົບຢ່າງໃກ້ຊິດກັບຂະແໜງການທີ່ກ່ຽວຂ້ອງໂດຍສະເພາະກົມແຜນການ ແລະ ການຮ່ວມມື ຂອງ ກຊສ, ກົມນະໂຍບາຍພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່.

❖ **<u>ກຸ່ມໂຄງການທີ 2: ແມ່ນບັນດາໂຄງການທີ່ໄດ້ເຊັນສັນຍາກັບລັດຖະບານ ສປປ ລາວ ແລ້ວແຕ່ບໍ່ໄດ້ລະບຸຕົວເລກທີ່ຈະປະກອບສ່ວນໃຫ້ ກປສ</u>**: ໃນກຸ່ມນີ້, ມີທັງໝົດ 37 ໂຄງການ ແລະ ອີງໃສ່ສັນຍາສໍາປະທານທີ່ເຂົາເຈົ້າໄດ້ເຊັນໄວ້ນັ້ນ ເຫັນວ່າບໍ່ໄດ້ກໍານົດຕົວເລກປະກອບສ່ວນ ເຂົ້າສູ່ ກປສ.

**<u>ວຽກຈຸດສຸມ:</u>**

- ປະສານສົມທົບຢ່າງໃກ້ຊິດກັບຂະແໜງການທີ່ກ່ຽວຂ້ອງໂດຍສະເພາະກົມແຜນການ ແລະ ການຮ່ວມມື ຂອງ ກຊສ, ກົມນະໂຍບາຍພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່.
- ປະກອບເອກະສານທາງການ ໃນນາມປະທານສະພາບໍລິຫານ ກປສ, ທັງໃນນາມ ລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທວງຫາ 37 ໂຄງການດັ່ງກ່າວ ໂດຍຜ່ານ ກະຊວງ ພະລັງງານ ແລະ ບໍ່ແຮ່ ເພື່ອດໍາເນີນການເຈລະຈາກັບບັນດາເຈົ້າຂອງໂຄງການເຫຼົ່ານີ້ຄືນໃໝ່ ເຊິ່ງໃນກຸ່ມໂຄງການກຸ່ມນີ້ຄາດຄະເນວ່າ ກປສ ຈະສາມາດລະດົມໄດ້ເຖິງ 3.9 ຕື້ກີບ (480,000 ໂດລາສະຫະລັດ) ຮອດປີ 2020;

❖ **<u>ກຸ່ມໂຄງການທີ 3:</u>** ແມ່ນກຸ່ມໂຄງການທີ່ໄດ້ເຊັນ ບົດບັນທຶກຄວາມເຂົ້າໃຈ (MoU) ແລະ ຂໍ້ຕົກລົງກ່ຽວກັບການພັດທະນາໂຄງການ (PDA) ກັບລັດຖະບານ ຫຼື ກໍາລັງຢູ່ໃນໄລຍະສຶກສາຄວາມເປັນໄປໄດ້, ແຕ່ນີ້ຫາປີ 2020 ທັງໝົດລວມມີ 76 ໂຄງການ.

**<u>ວຽກຈຸດສຸມ:</u>**

- ຫາກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ດໍາເນີນການເຈລະຈາກັບບັນດາໂຄງການເຫຼົ່ານີ້ ຊຶ່ງຕາມການຄາດຄະເນເບື້ອງຕົ້ນ ຄາດວ່າ ກປສ ໜ້າຈະລະດົມທຶນຈາກກຸ່ມນີ້ ໄດ້ຕໍ່າສຸດເຖິງ 5.9 ຕື້ກີບ (720,000 ໂດລາສະຫະລັດ);

- ປະກອບເອກະສານທາງການ ໃນນາມປະທານສະພາບໍລິຫານ ກປສ, ທັງໃນນາມ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຖິງ ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່;

❖ <u>**ກຸ່ມໂຄງການທີ 4:**</u> ແມ່ນກຸ່ມໂຄງການສາຍສົ່ງ. ໃນກຸ່ມນີ້ມີ 15 ໂຄງການ ຊຶ່ງຜ່ານມາບໍ່ທັນໄດ້ປະຕິບັດພັນທະໃດໆເທື່ອ.

<u>**ວຽກຈຸດສຸມ:**</u>

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາກັບບັນດາໂຄງການເຫຼົ່ານີ້ ຊຶ່ງຕາມການຄາດຄະເນເບື້ອງຕົ້ນ ຈະສາມາດລະດົມທຶນໄດ້ປະມານ 1.4 ຕື້ກີບ(180,000 ໂດລາສະຫະລັດ);
- ປະກອບເອກະສານທາງການ ໃນນາມປະທານສະພາບໍລິຫານ ກປສ, ທັງໃນນາມ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຖິງ ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ;

❖ <u>**ກຸ່ມໂຄງການທີ 5:**</u> ແມ່ນກຸ່ມໂຄງການໄຟຟ້ານໍ້າຕົກ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ບໍລິສັດຜະລິດໄຟຟ້າລາວມະຫາຊົນ ຫຼື EDL Gen: ເຊິ່ງໃນກຸ່ມນີ້ມີ 10 ໂຄງການ ທີ່ບໍ່ໄດ້ປະຕິບັດພັນທະໃດໆເທື່ອ.

<u>**ວຽກຈຸດສຸມ:**</u>

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາກັບບັນດາໂຄງການເຫຼົ່ານີ້ ຊຶ່ງຕາມການຄາດຄະເນເບື້ອງຕົ້ນຈະສາມາດລະດົມທຶນໄດ້ປະມານ 0.9 ຕື້ກີບ (120,000 ໂດລາສະຫະລັດ).

### ຂ. ຂົງເຂດບໍ່ແຮ່ ແລະ ທໍລະນີສາດແຮ່ທາດ

ລາຍຮັບ ຈາກການປະຕິບັດພັນທະຕາມສັນຍາ ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ໂຄງການລົງທຶນ ຂອງ 134 ບໍລິສັດສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ແລະ 81 ໂຄງການລົງທຶນ ດ້ານບໍ່ແຮ່ ໃຫ້ບັນລຸ 17,3 ຕື້ກີບ (2 ລ້ານໂດລາສະຫະລັດ), ສາມາດແບ່ງກຸ່ມໂຄງການອອກເປັນ 4 ກຸ່ມຄື:

❖ <u>**ກຸ່ມໂຄງການທີ 1 ແມ່ນກຸ່ມໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດທີ່ຂຶ້ນກັບກົມທໍລະນີສາດ ແລະ ແຮ່ທາດ, ກະຊວງພະລັງງານ ແລະ ບໍ່ແຮ່ ຊຶ່ງມີທັງໝົດ 134 ບໍລິສັດ**</u>, ໃນນັ້ນມີ 125 ບໍລິສັດ ທີ່ໄດ້ເຊັນສັນຍາສຳປະທານ ແລະ ໄດ້ລະບຸຕົວເລກເຂົ້າ ກປສ ຢ່າງຊັດເຈນ ພ້ອມທັງໄດ້ເປັນເຈົ້າການປະກອບສ່ວນພັນທະ ເປັນປົກກະຕິ.

**<u>ວຽກຈຸດສຸມ</u>**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ກະຕຸກຊຸກຍູ້ ດ້ວຍຫຼາຍຮູບການທີ່ເໝາະສົມເພື່ອຍາດແຍ່ງ ການປະກອບສ່ວນ ປະຕິບັດພັນທະທີ່ສາມາດປະຕິບັດໄດ້ເຖິງ 7.5 ຕື້ກີບ ( 913,500 ໂດລາສະຫະລັດ);

❖ <u>ກຸ່ມທີໂຄງການທີ 2 ແມ່ນກຸ່ມໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດທີ່ຂຶ້ນກັບກົມທໍລະນີສາດ ແລະ ແຮ່ທາດ , ກະຊວງພະລັງງານ ແລະ ບໍ່ແຮ່ ຊຶ່ງມີທັງໝົດມີ 134 ໂຄງການ</u>, ໃນນັ້ນມີ 9 ໂຄງການທີ່ບໍ່ໄດ້ລະບຸຕົວເລກປະກອບສ່ວນເຂົ້າ ກປສ.

**<u>ວຽກຈຸດສຸມ</u>:**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາກັບບັນດາໂຄງການເຫຼົ່ານີ້ ຊຶ່ງສາມາດເກັບພັນທະໄດ້ປະມານ 0.7 ຕື້ກີບ (90,000 ໂດລາສະຫະລັດ);

❖ <u>ກຸ່ມໂຄງການທີ 3: ແມ່ນກຸ່ມໂຄງການຂຸດຄົ້ນບໍ່ແຮ່ທີ່ຂຶ້ນກັບກົມບໍ່ແຮ່, ກະຊວງພະລັງງານ-ບໍ່ແຮ່ ລວມທັງ ໝົດ ມີ 81 ໂຄງການ.</u> ໃນຈຳນວນນີ້ມີ 52 ໂຄງການທີ່ໄດ້ລະບຸຕົວເລກເຂົ້າໃນ ກປສ ແລະ ປະຕິບັດພັນທະເປັນປົກກະຕິ.

**<u>ວຽກຈຸດສຸມ</u>:**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ກະຕຸກຊຸກຍູ້ ດ້ວຍຫຼາຍຮູບການທີ່ເໝາະສົມເພື່ອຍາດແຍ່ງ ການປະກອບສ່ວນ ປະຕິບັດພັນທະ ເຊິ່ງຄາດວ່າຈະສາມາດລະດົມໄດ້ເຖິງ 6,7 ຕື້ກີບ (817,248 ໂດລາສະຫະລັດ);

❖ <u>ກຸ່ມໂຄງການທີ 4: ແມ່ນກຸ່ມໂຄງການຂຸດຄົ້ນບໍ່ແຮ່ທີ່ຂຶ້ນກັບກົມບໍ່ແຮ່, ລວມທັງໝົດ ມີ 81 ໂຄງການ.</u> ໃນນີ້ຍັງມີ 29 ໂຄງການທີ່ຍັງບໍ່ມີການລະບຸຕົວເລກເຂົ້າໃນ ກປສ (ລວມທັງໂຄງການຂະໜາດໃຫຍ່ ເຊັ່ນ ພູເບ້ຍ ມາຍນິງ, ບໍ່ຄຳເຊໂປນ ແລະ ອື່ນໆ)

**<u>ວຽກຈຸດສຸມ</u>**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາກັບບັນດາໂຄງການເຫຼົ່ານີ້ ຊຶ່ງຄາດວ່າ ກປສ ຈະສາມາດລະດົມໄດ້ເຖິງ 2,2 ຕື້ກີບ (270,000 ໂດລາສະຫະລັດ).

**ຄ. ຂົງເຂດພື້ນຖານໂຄງລ່າງ, ກະສິກຳ-ປ່າໄມ້, ອຸດສະຫະກຳ ແລະ ການຄ້າ**

ຕາມຂໍ້ຕົກລົງ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະຕ້ອງດຳເນີນ ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳ

ມະຊາດ ເລກທີ 8056/ກຊສ, 17 ທັນວາ 2013 ເຊິ່ງລວມມີທັງໝົດ 16 ຂະແໜງການທີ່ຕ້ອງມີການເຊັນສັນຍາສຳປະທານ.

**<u>ວຽກຈຸດສຸມ</u>:**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ (ຫຼື ກອງປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນເມື່ອກ່ອນ) ແລະ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາ ທີ່ຄາດຄະເນເບື້ອງຕົ້ນສາມາດຍາດແຍ່ງ ການປະກອບສ່ວນ ໄດ້ປະມານ ຫຼາຍກວ່າ 2.2 ຕື້ກີບ (270,000 ໂດລາສະຫະລັດ).

### 2.4.3 ແຫຼ່ງລາຍຮັບທີ 3: ການຊ່ວຍເຫຼືອ ຈາກອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງ ປະເທດ

ມາຮອດປະຈຸບັນນີ້ ການລະດົມທຶນຈາກອົງການຈັດຕັ້ງພາຍໃນແມ່ນຍັງບໍ່ສາມາດເຂົ້າເຖິງໄດ້, ສ່ວນການປະກອບສ່ວນຈາກອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນຕ່າງໆ ດັ່ງລາຍລະອຽດລຸ່ມນີ້:

**ກ. ທະນາຄານໂລກ**

ທຶນຊ່ວຍເຫຼືອລ້າ ແລະ ຮ່ວງກູ້ຢືມ ຈາກທະນາຄານໂລກ 322 ຕື້ກີບ ຫຼື 38.8 ລ້ານໂດລາສະຫະລັດ ໄລຍະແຕ່ 2014-2021 ເພື່ອຈັດຕັ້ງປະຕິບັດ 48 ໂຄງການ ໃນຂົງເຂດນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ ແລະ ຂົງເຂດອະນຸລັກຊີວະນາພັນ (ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ).

**ຂ. ຈາກກອງທຶນສິ່ງແວດລ້ອມໂລກ (GEF)**

ກປສ ໄດ້ຮັບການແຕ່ງຕັ້ງ ໃຫ້ເປັນຈຸດປະສານງານ ກອງທຶນສິ່ງແວດລ້ອມໂລກ (GEF) ໃນປີ 2018 ແລະ ໄດ້ສຸມໃສ່ການຄົ້ນຄ້ວາ ແຫຼ່ງທຶນ ທີ່ສຳຄັນ ຈາກແຫຼ່ງທີ່ GEF ຈັດສັນໄວ້ໃຫ້ແລ້ວ, ຈາກແຫຼ່ງອື່ນໆ ເຊັ່ນ ກອງທຶນພັດທະນາປະເທດດ້ອຍພັດທະນາ, ກອງທຶນປັບຕົວເຂົ້າກັບສະພາບ ການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ ຊຶ່ງມາຮອດປະຈຸບັນພວກເຮົາຍັງສືບຕໍ່ຈັດຕັ້ງປະຕິບັດ 5 ໂຄງການ ພາຍໃຕ້ ການສະໜອງທຶນ ຂອງກອງທຶນສິ່ງແວດລ້ອມໂລກ ໄລຍະ 5 (GEF 5), GEF 6, ສຳລັບໄລຍະ GEF 7 (2019-2022) ນີ້ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ສົ່ງຫນັງສືທາງການແຈ້ງເຈດຈຳນົງເຖິງກອງເລຂາ ກອງທຶນສິ່ງແວດລ້ອມໂລກ ສະບັບວັນທີ 24 ສິງຫາ 2017 ເພື່ອດຳເນີນການຮ່ວມມື ຈັດຕັ້ງປະຕິບັດທຶນດັ່ງກ່າວນີ້ຮ່ວມກັບທະນາຄານໂລກ ໃຫ້ເປັນໂຄງການຮ່ວມມືໄລຍະ 3 (2019-2022) ຜ່ານ ກປສ ຊຶ່ງລວມທັງໝົດແລ້ວ ຄາດວ່າ ຈະມີວົງເງິນປະມານ 267 ຕື້ກີບ ຫຼື 32 ລ້ານໂດລາສະຫະລັດ) ໄດ້ຈາກ ກອງທຶນສິ່ງແວດລ້ອມໂລກ (GEF).

**ຄ. ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF)**

ພາຍຫຼັງ ສປປ ລາວ ໄດ້ຮັບຮອງເອົາ ກົນໄກ ເຂົ້າເຖິງທຶນ ໂດຍກົງ (Direct Access) ແລ້ວ ໂດຍບໍ່ຜ່ານ ລະບົບສະຫະປະຊາຊາດ ຈຶ່ງໄດ້ຄົ້ນຄ້ວາ ເຫັນດີ ໃຫ້ພິຈາລະນາ ເອົາ ກປສ ເປັນຈຸດປະສານງານການຈັດຕັ້ງປະຕິບັດ ແຫ່ງຊາດ (National Implementing Entity-NIE) ຊຶ່ງມາປະຈຸບັນຍັງຢູ່ໃນໄລຍະກະກຽມນຳສະເໜີ ກປສ ເປັນ NIE ຢູ່ ຕາມຫນັງສື ສະເໜີຫາກອງເລຂາ ຂອງກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ ສະບັບເລກທີ 0629/DDMCC ລົງ

ວັນທີ 7/7/2017 ແລະ ກະກຽມ ຈັດຕັ້ງປະຕິບັດໂຄງການ ສ້າງຄວາມເຂັ້ມແຂງ ແລະ ກຽມຄວາມພ້ອມ ຂອງຫ້ອງການ ກປສ ເພື່ອຈັ້ງປະຕິບັດ ໜ້າທີ່ດັ່ງກ່າວ ໂດຍ ຈະມີທຶນ ປະມານ ຕື້ກີບ (4 ແສນ ໂດລາສະຫະລັດ) ພາຍໃນທ້າຍປີ 2018.

**ວຽກຈຸດສຸມ:**

- ດໍາເນີນການປະເມີນຜົນການຈັດຕັ້ງປະຕິບັດໂຄງການ ຄສລ2 ທີ່ໄດ້ຮັບທຶນຈາກທະນາຄານໂລກ ແລະ ກະກຽມ ໂຄງການໃໝ່ ສໍາລັບໄລຍະ 3;
- ເພີ່ມທະວີການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ບຸກຄະລາກອນ ເພື່ອກຽມຄວາມພ້ອມໃນການໃຫ້ ບໍລິການກົນໄກການເງິນ;
- ຄົ້ນຄ້ວານະໂຍບາຍທີ່ເລິກເຊິ່ງ ແລະ ແຜນວຽກຈຸດສຸມເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ປະສົບ ປະການ ແລະ ທຶນຮອນ;
- ເຮັດໜ້າທີ່ເປັນຈຸດປະສານງານທີ່ດີຕໍ່ກອງທຶນສິ່ງແວດລ້ອມໂລກ, ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າ ອາກາດ, ທະນາຄານໂລກ ແລະ ອົງການໃຫ້ທຶນອື່ນໆ.

### 2.4.4 ແຫຼ່ງລາຍຮັບທີ 4: ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ເຖິງໄດ້ລະບູບ ຢ່າງຈະແຈ້ງ ໃນກົດໝາຍ ວ່າດ້ວຍ ກປສ, ກົດໝາຍ ໄຟຟ້າ, ກົດໝາຍ ບໍ່ແຮ່, ກົດໝາຍ ປ່າໄມ້ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ກໍ່ຕາມ, ແຕ່ກປສ ຍັງບໍ່ສາມາດເຂົ້າເຖິງການຍາດແຍ່ງທຶນປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ ຍ້ອນຂາດຂະບວນການລະດົມ, ໂຄສະນາເຜີຍແຜ່ ແລະ ຂອດການປະສານງານທີ່ດີ.

**ວຽກຈຸດສຸມ:**

- ເພີ່ມທະວີການໂຄສະນາເຜີຍແຜ່ ແລະ ປຸກລະດົມ ເພື່ອຍາດແຍ່ງການປະກອບສ່ວນ, ການມີສ່ວນຮ່ວມ ແລະ ການເຂົ້າຮ່ວມ ໃນຂະບວນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມແບບຍືນ ຍົງ;
- ສົ່ງເສີມວຽກດີຄົນເດັ່ນໃຫ້ລາງວັນແກ່ຜູ້ທີ່ມີຄວາມຫ້າວຫັນໃນການປະກອບສ່ວນ ໂດຍຜ່ານສື່ມວນຊົນ.

### 2.4.5 ແຫຼ່ງລາຍຮັບທີ 5: ດອກເບ້ຍ ແລະ ຜົນກໍາໄລ ທີ່ເກີດຈາກການລົງທຶນ ຂອງ ກປສ ເອງ

ກປສ ສືບຕໍ່ສ້າງລາຍຮັບ ຈາກ 2 ແຫຼ່ງດັ່ງນີ້:

**ກ. ດອກເບ້ຍຈາກທະນາຄານທີ່ ກປສ** ໄດ້ຮັບປະມານ 2 ຕື້ກີບ (300,000 ໂດລາສະຫະລັດ) ຕໍ່ປີ ໃນ 5 ປີ ກໍ່ຕົກ ປະມານ 7.4 ຕື້ກີບ (900,000 ໂດລານສະຫາລັດ).

**ຂ. ດອກເບ້ອຍເງິນກູ້** ຊຶ່ງໄດ້ລົງທຶນໃຫ້ແກ່ 21 ໂຄງການປະມານ 6.5 ຕື້ກີບ (827,191 ໂດລາສະຫະລັດ) ກວມ ເອົາ 91% ຂອງທຶນກູ້ຢືມທັງໝົດທີ່ຈັດສັນໄວ້ 7,4 ຕື້ກີບ (900,000 ໂດລາສະຫະລັດ) ແລະ ຍັງເຫຼືອຢູ່ 5.89 ຕື້ ກີບ (72,808 ໂດລາສະຫະລັດ) ຫລື ເທົ່າກັບ 9%. ໃນນັ້ນ, ມີ 1 ໂຄງການ ໄດ້ສົ່ງທັງຕົ້ນທຶນກູ້ຢືມ ແລະ ທັງ ດອກເບ້ຍ ທັງໝົດ ແລະ ຢຸດຕິໂຄງການ ຊຶ່ງຖືວ່າມາຮອດປະຈຸບັນ ມີພຽງແຕ່ 20 ໂຄງການ. ກປສ ມີຄວາມສາມາດ ເກັບກູ້ດອກເບ້ຍໄດ້ປະມານ 462 ລ້ານກີບ (55,692ໂດລາສະຫະລັດ) ພາຍໃນ 3 ປີ ຮອດປີ 2020.

**ວຽກຈຸດສຸມ:**

- ເພີ່ມທະວີການຄຸ້ມຄອງ ແລະ ການບໍລິຫານທຶນ ທີ່ໄດ້ຈາກດອກເບ້ຍ ໃຫ້ເກີດປະໂຫຍດສູງສຸດ, ໂປ່ງໃສ ແລະ ມີຈຸດສຸມ;
- ຕີລາຄາ ດ້ານຕັ້ງໜ້າ, ຂໍ້ຄົງຄ້າງ ແລະ ຖອດຖອນບົດຮຽນ ກ່ຽວກັບກິດຈະກຳສະໜອງເງິນກູ້ ທັງໝົດ ;
- ຄົ້ນຄ້ວາວິທີການ ແລະ ດຳເນີນມາດຕະການທີ່ເໝາະສົມສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນບັນດາໂຄງການເງິນກູ້ ທີ່ບໍ່ປະຕິບັດສັນຍາ;
- ດຳເນີນກອງປະຊຸມ ປຶກສາຫາລືກ່ຽວກັບໂຄງການເງິນກູ້ 1 ຄັ້ງຕໍ່ປີ.

### 2.4.6 ແຫຼ່ງລາຍຮັບ 6: ຄ່າບູລະນະຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ

ອີງຕາມມາດຕາ 58 ຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ໄດ້ລະບຸໄວ້ວ່າ: ເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕ້ອງໄດ້ວາງເງິນຄ້ຳປະກັນ ການບູລະນະ ຟື້ນຟູສິ່ງແວດລ້ອມ, ການແກ້ໄຂມົນລະພິດ ແລະ ອະນາໄມສິ່ງແວດລ້ອມ ຊຶ່ງເກີດຈາກການດຳເນີນວຽກງານຂອງຕົນ ຈົນຮອດໄລຍະປິດໂຄງການລົງທຶນ ຫຼື ກິດຈະການດັ່ງກ່າວ.

ເງິນຄ້ຳປະກັນການບູລະນະ ສິ່ງແວດລ້ອມ ກວມເອົາຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນໄລຍະຕິດຕັ້ງ, ດຳເນີນງານ, ປິດກິດຈະການ ຫຼື ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງປິດກິດຈະການ. ເງິນຄ້ຳປະກັນ ຈະຖືກ ນຳໃຊ້ໃນກໍລະນີທີ່ຜູ້ປະກອບການ ບໍ່ປະຕິບັດພັນທະຂອງຕົນໃນການບູລະນະ ຟື້ນຟູສິ່ງແວດລ້ອມ, ການແກ້ໄຂ, ອະນາໄມສິ່ງແວດລ້ອມ, ທົດແທນຄ່າເສັຍຫາຍ ຫຼື ຄ່າໃຊ້ຈ່າຍໃນການແກ້ໄຂຜົນກະທົບທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຫຼື ສັນຍາ.

ມາຮອດປະຈຸບັນ ຫກປສ ຍັງບໍ່ສາມາດເຂົ້າເຖິງແຫຼ່ງທຶນດັ່ງກ່າວ ຍ້ອນພວກເຮົາຍັງຂາດການປະສານສົມທົບທີ່ດີລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແລະ ຂາດລະບຽບການສະເພາະ ຮອງຮັບວຽກງານດັ່ງກ່າວ.

**<u>ວຽກຈຸດສຸມ</u>**

- ຫກປສ ຕ້ອງເປັນເຈົ້າການ ປະສານສົມທົບ ກັບກົມນະໂຍບາຍ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກອງປະເມີນ ຕິດຕາມກວດກາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກັບທຸກພາກສ່ວນ ທີ່ກ່ຽວຂ້ອງ ໂດຍສະເພາະ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ແຜນການ ແລະ ການລົງທຶນ ດຳເນີນການເຈລະຈາ ທີ່ຄາດຄະເນເບື້ອງຕົ້ນສາມາດຍາດແຍ່ງ ການປະກອບສ່ວນ ໄດ້ປະມານ ຫຼາຍກວ່າ 3.7 ຕື້ກີບ (450,000 ໂດລາສະຫະລັດ).
- ຕ້ອງຜັນຂະຫຍາຍເປັນອັນລະອຽດຢູ່ໃນນິຕິກຳໃຕ້ກົດໝາຍ ໂດຍສະເພາະໃນດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ.

### 2.4.7 ແຫຼ່ງລາຍຮັບ 7: ຄ່າບໍລິການລະບົບນິເວດ

ຄ່າບໍລິການລະບົບນິເວດແມ່ນ ລາຍຮັບວິຊາການ ທີ່ເກີດຈາກ ປະຕິບັດພັນທະເປັນເງິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ທີ່ໄດ້ຮັບອະນຸຍາດ ຊົມໃຊ້ (ຫຼື ຜູ້ຊົມໃຊ້) ຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ດຳເນີນທຸລະກິດ ການລົງທຶນລົງທຶນ ທີ່ຄາດຄະເນຈະສົ່ງຜົນກະ ທົບ ທາງລົບ ຕໍ່ຊັບພະຍາກອນທຳມະຊາດ

ແລະ ສິ່ງແວດລ້ອມ ຜ່ານກປສ ນຳໄປສູ່ ປະຊາຊົນບັນດາເຜົ່າ (ຜູ້ອະນຸລັກ) ທີ່ກ່ຽວຂ້ອງ ໃນທ້ອງຖິ່ນນັ້ນໆ ທີ່ໄດ້ເຮັດໜ້າທີ່ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ເພື່ອຍົກລະດັບ ຊີວິດການເປັນຢູ່ ເຂົາເຈົ້າ.

ຫກປສ ຍັງບໍ່ສາມາດເຂົ້າເຖິງແຫຼ່ງທຶນດັ່ງກ່າວ ຍ້ອນພວກເຮົາຍັງຂາດການປະສານສົມທົບທີ່ດີ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ແລະ ນິຕິກຳສະເພາະດ້ານ ເພື່ອເຄື່ອນໄຫວວຽກງານດັ່ງກ່າວ.

**<u>ວຽກຈຸດສຸມ</u>:**

- ຫ້ອງການ ກປສ ມີຈຸດສຸມ ໃນການປະສານສົມທົບ ກັບທຸກພາກສ່ວນ ທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ ຮ່າງລັດ ຖະບັນຍັດ ວ່າດ້ວຍ ຄ່າບໍລິການລະບົບນິເວດ ທີ່ລາວທັງ ຄ່າຊົດເຊີຍ ຊີວະນາໆພັນ ໃນໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ເພື່ອວາງກົນໄກ ທີ່ເໝາະສົມ;
- ດຳເນີນການຖອດຖອນບົດຮຽນ ທີ່ດີດີເລີດ ໃນວຽກງານດັ່ງກ່າວ ຈາກອະນຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອມາໝູນໃຊ້ ໃນສປປ ລາວ ໂດຍສະເພາະ ໝູນໃຊ້ຫຼັກການ ຂອງສະຫະປະຊາຊາດ "ຜູ້ນຳໃຊ້ ເປັນຜູ້ຈ່າຍ" 'User Pay Principle'.

**2.4.8 ແຫຼ່ງລາຍຮັບ 8: ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ.**

**ກປສ ໂດຍການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ກໍ່ຄື ດຳລັດ ວ່າດ້ວຍ ກອງທຶນປົກປັກຣກສາສິ່ງແວດລ້ອມ ຕ້ອງສ້າງກົນໄກ ແລະ ຂຸດຄົ້ນ ລາຍຮັບ ຈາກຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍ ຕໍ່ສິ່ງແວດລ້ອມ ໂດຍການຈັດຕັ້ງປະຕິບັດ ຫຼັກການ ສະຫະປະຊາຊາດ "ຜູ້ກໍ່ມົນລະພິດເປັນຜູ້ຈ່າຍ"Polluter Pay Principle" ໃນໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ.**

ປະຈຸບັນ ຫກປສ ຍັງບໍ່ສາມາດເຂົ້າເຖິງແຫຼ່ງທຶນດັ່ງກ່າວ ຍ້ອນພວກເຮົາຍັງຂາດການປະສານສົມທົບທີ່ດີ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ແລະ ນິຕິກຳສະເພາະດ້ານ ເພື່ອເຄື່ອນໄຫວວຽກງານດັ່ງກ່າວ.

**<u>ວຽກຈຸດສຸມ:</u>**

- ຫ້ອງການ ກປສ ມີຈຸດສຸມ ໃນການປະສານສົມທົບ ກັບທຸກພາກສ່ວນ ທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ ຮ່າງລະບຽບການ ທີ່ກ່ຽວຂ້ອງ ໃນໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ເພື່ອວາງກົນໄກ ທີ່ ເໝາະສົມ;
- ດຳເນີນການຖອດຖອນບົດຮຽນ ທີ່ດີດີເລີດ ໃນວຽກງານດັ່ງກ່າວ ຈາກອະນຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອມາໝູນໃຊ້ໃນ ສປປ ລາວ ໂດຍສະເພາະ ໝູນໃຊ້ຫຼັກການ ຂອງສະຫະປະຊາຊາດ "ຜູ້ນຳໃຊ້ ເປັນຜູ້ຈ່າຍ" 'Polluter Pay Principle'.

ສະຫຼຸບລວມ: ຈາກສະພາບຄວາມເປັນຈິງ ໃນປະຈຸບັນ ກປສ ສາມາດ ເຂົ້າເຖິງແຫຼ່ງທຶນ ທີ່ມີທ່າແຮງ ໃນການສ້າງລາຍຮັບໄດ້ຄື: ລາຍຮັບດອກເບ້ຍ ຈາກຕົ້ນທຶນຂອງງົບປະມານລັດ ຝາກໃນທະນະຄານການຄ້າຕ່າງປະເທດ; ຈາກການປະກອບສ່ວນປະຕິບັດພັນທະ ຕາມສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ໂຄງການລົງທຶນ; ຈາກການຊ່ວຍເຫຼືອໂດຍກົງ ຈາກພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸຄາດໝາຍສູຊົນ ໃນມູນຄ່າ 743 ຕື້ກີບ (89,6 ລ້ານໂດລາສະຫະລັດ), ຊຶ່ງ ໃນນັ້ນ ມາຈາກການຊ່ວຍເຫຼືອລ້າ ແລະ ຮ່ວງກູ້ຢືມ ຈາກທະນາຄານໂລກ 322 ຕື້ກີບ ຫຼື 38.8 ລ້ານໂດລາສະຫະລັດ ໄລຍະແຕ່ 2014-2021 ຊຶ່ງກວມເອົາ 43.3% ຂອງຄາດຄະເນລາຍຮັບທັງໝົດ, ອີກປະມານ 43.4% (ປະມານ 322 ຕື້ກີບ ຫຼື 38.8 ລ້ານໂດລາສະຫະລັດ) ໄດ້ຈາກ ກອງທຶນສິ່ງແວດລ້ອມໂລກ (GEF). ອີກປະມານ 13.3%

(ປະມານ 99 ຕື້ກີບ ຫຼື 11.9 ລ້ານໂດລາສະຫະລັດ) ແມ່ນລາຍຮັບຂອງ ກປສ ເອງ ຈາກການປະຕິບັດພັນທະຕາມສັນຍາສໍາປະທານ ຂອງໂຄງການລົງທຶນ ແລະ ກິດຈະການພັດທະນາ ຮອດປີ 2020.

**ຕາຕະລາງລາຍລະອຽດປີກຍ່ອຍຈາກການຄາດຄະເນແຫຼ່ງທຶນໃນຂະແໜງການຕ່າງໆ 2018-2020**

| ລ/ດ | ແຫຼ່ງທຶນ | ຈໍານວນ ໂຄງການ | ລວມມູນຄ່າ ໂດລາ ສະຫະລັດ | ລວມມູນຄ່າ ກີບ | ໝາຍເຫດ |
|---|---|---|---|---|---|
| I | **ງົບປະມານຂອງລັດ** | | | | |
| 1.1 | ຕົ້ນທຶນທີ່ຝາກໃນທະນະຄານການຄ້າຕ່າງປະເທດ (12 ຕື້ກີບ ຫຼື 5 ລ້ານໂດລາສະຫະລັດ) | | ດອກເບ້ຍ ຢູ່ໃນຂໍ້ V | | |
| II | **ການປະກອບສ່ວນຕາມພັນທະຕາມສັນຍາລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ໂຄງການລົງທຶນ** | 132 | | | |
| 2.1 | ຂົງເຂດພະລັງງານ | | | | |
| 1). | ໂຄງການທີ່ມີການລະບຸວົງເງິນ (ໃນສັນຍາສໍາປະທານ) ທີ່ຕ້ອງຈ່າຍໃຫ້ ກປສ | 19 | 3,418,828 | 28,376,272,400 | ສາມາດເກັບໄດ້ເລີຍ |
| 2). | ໂຄງການທີ່ບໍ່ມີການລະບຸວົງເງິນ (ໃນສັນຍາສໍາປະທານ) ທີ່ຕ້ອງຈ່າຍໃຫ້ ກປສ | 37 | 480,000 | 3,984,000,000 | ກົມນະໂຍບາຍ ຂອງ ກຊສ ຕ້ອງໄດ້ເຈລະຈາຄືນ |
| 3). | ໂຄງການທີ່ມີ MOU, PDA ແລະ ຢູ່ໃນໄລຍະເບື້ອງຕົ້ນຂອງການສຶກສາຄວາມເປັນໄປ ໄດ້ | 76 | 720,000 | 5,976,000,000 | ຫຼັງຈາກເຮັດການປະເມີນສໍາເລັດແລ້ວ, ກອງປະເມີນຕ້ອງໄດ້ເຈລະຈາບ້ວງທຶນທີ່ຕ້ອງປະກອບເຂົ້າກປສ |
| 4). | ໂຄງການສາຍສົ່ງ | 15 | 180,000 | 1,494,000,000 | ກົມນະໂຍບາຍຕ້ອງໄດ້ເຈລະຈາຄືນ |
| 5). | ໂຄງການເຂື່ອນໄຟຟ້ານໍ້າຕົກທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ EDL Gen | 10 | 120,000 | 996,000,000 | ສະພາບໍລິຫານ ຫຼື ຄະນະວິຊາການ ຂອງ ກປສ ຕ້ອງໄດ້ສື່ສານກັບ MEM/EDL Gen |
| 2.2 | ຂົງເຂດບໍ່ແຮ່ ແລະ ທໍລະນີສາດ | 134+81 | | | |
| 1). | ບໍລິສັດ/ໂຄງການຂຸດຄົ້ນ ແລະ ສໍາຫຼວດທີ່ໄດ້ລະບຸວົງເງິນທີ່ຕ້ອງຈ່າຍໃຫ້ ກປສ | 125 | 913,500 | 7,582,050,000 | ຈ່າຍເປັນປົກກະຕິ |
| 2). | ບໍລິສັດ/ໂຄງການຂຸດຄົ້ນ ແລະ ສໍາຫຼວດທີ່ບໍ່ໄດ້ລະບຸພັນທະ ທີ່ຕ້ອງປະກອບສ່ວນເຂົ້າໃນ ກປສ | 9 | 90,000 | 747,000,000 | ຂະແໜງ ບໍ່ແຮ່ຕ້ອງໄດ້ເຈລະຈາຄືນ |

| | | | | | |
|---|---|---|---|---|---|
| 3). | ບໍລິສັດ/ໂຄງການຂຸດຄົ້ນບໍ່ແຮ່ ທີ່ໄດ້ລະບຸພັນທະທີ່ຈະປະກອບສ່ວນເຂົ້າໃນກອງທຶນ | 52 | 817,248 | 6,783,158,400 | ຈ່າຍເປັນປົກກະຕິ |
| 4). | ບໍລິສັດ/ໂຄງການຂຸດຄົ້ນບໍ່ແຮ່ ທີ່ບໍ່ໄດ້ລະບຸພັນທະທີ່ຈະປະກອບສ່ວນເຂົ້າໃນກອງທຶນ | 29 | 270,000 | 2,241,000,000 | ຂະແໜງ ບໍ່ແຮ່ຕ້ອງໄດ້ເຈລະຈາຄືນ |
| 2.3 | ຂົງເຂດພື້ນຖານໂຄງລ່າງ, ກະສິກຳ-ປ່າໄມ້, ອຸດສະຫະກຳ ແລະ ການຄ້າ | | 270,000 | 2,241,000,000 | |
| III | **ທຶນ ຈາກການຊ່ວຍເຫຼືອໂດຍກົງ ຈາກພາຍໃນ ແລະ ຕ່າງປະເທດ** | | | | |
| 3.1 | ໂຄງການ ຄສລ2 | 38 | | | ກຳລັງດຳເນີນ |
| 3.2 | ກອງທຶນສິ່ງແວດລ້ອມໂລກ (GEF 5-6) | 5 | 21,275,688 | 176,588,210,400 | ກຳລັງດຳເນີນ |
| 3.3 | ກອງທຶນສິ່ງແວດລ້ອມໂລກ (GEF 7) | | 11,000,000 | 91,300,000,000 | ເລີ່ມ 2019-2022 |
| 3.4 | ກອງທຶນພັດທະນາປະເທດດ້ອຍພັດທະນາ (LDCF) | | 5,000,000 | 41,500,000,000 | ເລີ່ມ 2019-2022 |
| 3.5 | ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) | | 400,000 | 3,320,000,000 | ກະກຽມຄວາມພ້ອມ ເລີ່ມ 2018 |
| 3.6 | ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) | | 1,200,000 | 9,960,000,000 | ກຳລັງດຳເນີນ |
| IV | **ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ** | | | | |
| V | **ດອກເບ້ຍ ແລະ ຜົນກຳໄລ ທີ່ເກີດຈາກການລົງທຶນຂອງ ກປສ ເອງ** | | | | |
| 5.1 | ສ້າງລາຍຮັບຈາກດອກເບ້ຍຈາກຕົ້ນທຶນທີ່ຝາກໃນທະນະຄານການຄ້າຕ່າງປະເທດ | | 900,000 | 7,470,000,000 | |
| 5.2 | ດອກເບ້ຍຈາກເງິນກູ້ | | 55,692 | 462,240,939 | |
| VI | **ຄ່າບູລະນະຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ** | | | | |
| VII | **ຄ່າບໍລິການລະບົບນິເວດ** | | | | |
| VIII | **ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ.** | | | | |
| | ລວມ | | **47,110,956** | **391,020,932,139** | |

## 2.5 ແຜນບູລິມະສິດ ດ້ານການສື່ສານ ກ່ຽວກັບ ຜົນສຳເລັດ ໃນການເຄື່ອນໄຫວ ຂອງ ກປສ

ໃນແຜນການ ດ້ານການສື່ສານ ແມ່ນສຸມໃສ່ ການໂຄສະນາເຜີຍແຜ່, ການສະໜອງຂໍ້ມູນ-ຂ່າວສານ ແລະ ປູກຈິດສຳນຶກ ກ່ຽວກັບ ຜົນສຳເລັດໃນການເຄື່ອນໄຫວຂອງ ກປສ ແນ່ໃສ່ໃຫ້ທົ່ວສັງຄົມ ທັງພາກລັດ, ເອກະຊົນ, ພາກທຸລະກິດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ໃນພາກພື້ນ ແລະ ສາກົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເຫັນໄດ້ຄວາມໝາຍຄວາມສຳຄັນ, ຄວາມເຂັ້ມແຂງ, ໂປ່ງໃສ, ຄວາມມີປະສິດທິພາບ ແລະ ປະສິດທິຜົນ ໃນການເຄື່ອນໄຫວ ກປສ ຊຶ່ງສາມາດນຳໄປສູ່ ການຍາດແຍ່ງການຮ່ວມມື ການມີສ່ວນຮ່ວມ ແລະ ການປະກອບສ່ວນທຶນຮອນ ໃຫ້ແກ່ ກປສ ໄດ້ນັບມື້ນັບເຕີບໃຫຍ່ກາຍເປັນກົນໄກການເງິນ ທີ່ຍືນຍົງ ສະໜອງໃຫ້ແກ່ວຽກງານຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໄປຕາມທິດສີຂຽວ ແລະ ຍືນຍົງ.

ໃນແຜນການ ດັ່ງກ່າວ, ກປສ ແນໃສ່ເຮັດແນວໃດໃຫ້ ກປສ ສາມາດເຂົ້າເຖິງການນຳໃຊ້ທ່າແຮງ ຂອງບັນດາສື່ສານມວນຊົນ ເປັນຕົ້ນ: ສື່ສິ່ງພິມ, ໂທລະພາບ, ວິທະຍຸ ແລະ ຮູບແບບອື່ນໆ ເພື່ອສະໜອງຂໍ້ມູນຂ່າວສານໃຫ້ແກ່ທຸກພາກສ່ວນ ທີ່ກ່ຽວຂ້ອງ ແລະ ທົ່ວສັງຄົມ ໄດ້ຮັບຊາບ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ຊຶ່ງແຜນດຳເນີນງານດັ່ງກ່າວ ປະກອບມີ 5 ແຜນຈຸດສຸມ ລະອຽດດັ່ງນີ້:

### ວຽກຈຸດສຸມ 1: ການສື່ສານ ຜ່ານໜັງສືພິມ

ຫກປສ ເອົາໃຈໃສ່ ຄົ້ນຄວ້າ ການເຮັດສັນຍາກັບສຳນັກໜັງສືພິມໃດໆ ເປັນລາຍວັນ ຫຼື ລາຍອາທິດ ຫຼື ລາຍເດືອນເປັນຕົ້ນກັບສຳນັກໜັງສືພິມທີ່ມີສື່ສຽງ ໃນສັງຄົມພວກເຮົາ ເຊັ່ນ: ໜັງສືພິມວຽງຈັນທາມສ໌, ວຽງຈັນໃໝ່, ປະຊາ ຊົນ, ໜັງສືພິມປະເທດລາວ ແລະ ອື່ນໆ ໂດຍໜ່ວຍຂ່າວສານ ຂອງ ຫກປສ ດຳເນີນການສັງລວມ ເປັນບົດຄວາມສັ້ນ ກ່ຽວກັບຜົນງານ ຂອງ ກປສ ຕອບສະໜອງໃຫ້ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ແນ່ໃສເປົ້າໝາຍຜູ້ອ່ານຕົ້ນຕໍ ພະນັກງານລັດ, ພາກເອກະຊົນ, ພາກທຸລະກິດ, ຜູ້ສະໜອງທຶນ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນຜູ້ທີ່ມີເງື່ອນໄຂເຂົ້າເຖິງ. ນອກນັ້ນ, ຍັງຕ້ອງໄດ້ສະໜອງເປັນ ພາສາອັງກິດ ໃຫ້ແກ່ໜັງສືພິມ ພາສາອັງກິດ ໜັງສືພິມວຽງຈັນທາມສ໌ ແລະ ອື່ນໆ.

ຫກປສ ເປັນເຈົ້າການ ເຊື້ອເຊີນສື່ສິ່ງພິມ ຫຼື ໜັງສືພິມຕ່າງໆ ມາເກັບກຳຂ່າວ ໃນເວລາມີພິທີການ ທາງການ ພາຍໃນ ຫຼື ກ່ຽວຂ້ອງກັບວຽກງານການເຄື່ອນໄຫວ ຂອງ ກປສ ເຊັ່ນ: ປະຊຸມ, ຝຶກອົບຮົມ, ພິທີເຊັນສັນຍາ ແລະ ອື່ນໆ ທີ່ເຫັນວ່າສຳຄັນ.

### ວຽກຈຸດສຸມ 2: ການສື່ສານ ຜ່ານລາຍການວິທະຍຸ

ຫກປສ ຄົ້ນຄວ້າການສ້າງສັນຍາ ກັບບັນດາວິທະຍຸຕ່າງໆ ເພື່ອສົ່ງເສີມພັດທະນາ ລາຍການວິທະຍຸ ສະເພາະຂອງ ກປສ ໃຫ້ໄດ້ດຳເນີນການ ໃນເວລາອັນຄວນ ແລະ ໄດ້ຮັບການພັດທະນາໃຫ້ເປັນຮູບປະທຳ ໂດຍແນໃສ່ ທຸກກຸ່ມເປົ້າໝາຍລວມທັງ ປະຊາຊົນບັນດາເຜົ່າຢູ່ຫ່າງໄກສອກຫຼີກ ທີ່ທຸກຍາກ ສາມາດເຂົ້າເຖິງຂໍ້ມູນ-ຂ່າວສານ ກ່ຽວກັບຜົນງານການເຄື່ອນໄຫວ ຂອງ ກປສ ໂດຍໜ່ວຍຂ່າວສານ ຂອງ ຫກປສ ສັງລວມບັນດາຂໍ້ມູນ-ຂ່າວສານ ເປັນບົດຄວາມສະເພາະດ້ານຕ່າງໆ ໃນແງ່ຂອງການສົ່ງເສີມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ.

ຫກປສ ປະສານສົມທົບ ກັບບັນດາວິທະຍຸຕ່າງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງລາຍການວິທະຍຸສົນທະນາ ກ່ຽວກັບ ບັນຫາສິ່ງແວດລ້ອມ ຂອງ ສປປ ລາວ ໂດຍແນໃສ່ ກຸ່ມເປົ້າໝາຍ ຄື: ຊາວໜຸ່ມ, ນັກຮຽນນັກສຶກສາ, ປັນຍາຊົນ, ພະນັກງານລັດ ແລະ ທຸກພາກສ່ວນ ທີ່ສາມາດເຂົ້າເຖິງໄດ້.

### ວຽກຈຸດສຸມ 3: ການສື່ສານ ຜ່ານລາຍການໂທລະພາບ

ຫກປສ ສົມທົບຢ່າງໃກ້ຊິດ ກັບຫ້ອງການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຸກຍູ້ ລາຍການໂທລະພາບເພື່ອສິ່ງແວດລ້ອມ ໃຫ້ມີປະສິດທິຜົນ ໂດຍແນ່ໃສ່ປັບປຸງລາຍການ ທີ່ກຳລັງດຳເນີນການຖ່າຍທອດ 3 ເທື່ອ ຂອງ

30 ນາທີ ໃນແຕ່ລະທິດ ໃນຕອນເຊົ້າວັນເສົາ, ຕອນຄ່ຳວັນອາທິດ ແລະ ຕອນເຊົ້າວັນຈັນ ໂດຍໂທລະພາບແຫ່ງຊາດ ຊອງ 3 ເພື່ອໃຫ້ຮັບປະກັນ ໂຄສະນາເຜີຍແຜ່ ຜົນງານການເຄື່ອນໄຫວ ຂອງກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ , ເຜີຍແຜ່ ເຫດການສຳຄັນຕ່າງໆ ດ້ານສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ, ໃນນັ້ນ ໄດ້ກຳນົດເວລາ ຈຳນວນໜຶ່ງ ເພື່ອໂຄສະນາ ເຜີຍແຜ່ ຜົນງານການເຄື່ອນໄຫວ ຂອງ ກປສ ພ້ອມດຽວກັນນັ້ນ ຫກປສ ແລະ ຫ້ອງການ ກຊສ ຕ້ອງປະສົມປະສານ ກ່ຽວກັບ ຂໍ້ມູນ-ຂ່າວສານ ສະໜອງໃຫ້ລາຍການ ດັ່ງກ່າວ ເປັນປົກກະຕິ ແລະ ຕໍ່ເນື່ອງ.

**ວຽກຈຸດສຸມ 4: ການປັບປຸງ ລະບົບຂ່າວສານ ຂອງ ຫກປສ**

**ການສື່ສານຜ່ານ ເວັບໄຊ ແລະ ເຟສບຸກ -** ຫກປສ ເພີ່ມທະວີ ການພັດທະນາ ລະບົບການສື່ສານ ຜ່ານເວັບໄຊ ແລະ ເຟສບຸກ ຂອງ ກປສ ເອງ ໂດຍການຈະຫັນ ມານຳໃຊ້ສື່ ດິຈິຕອລ ທີ່ກຳລັງໄດ້ຮັບຄວາມນິຍົມ ແທນວິທີການສື່ສານແບບດັ້ງເດີມ ແລະ ນຳໃຊ້ເຕັກໂນໂລຊີ ທີ່ມີປະສິດທິຜົນກວ່າເກົ່າ ແຕ່ມີຕົ້ນທຶນຕ່ຳຮັບປະກັນການການປະຢັດ ຊຶ່ງມີເວັບໄຊ: www.laoepf.org.la, ແລະ ເຟສບຸກ: www.facebook.com/LaoEPF ແນ່ໃສ່ຮັບປະກັນໃຫ້ຊ່ອງທາງການສື່ສານດັ່ງກ່າວ ເປັນຊ່ອງທາງສື່ສານທີ່ສຳຄັນ ມີການຊົມໃຊ້ຢ່າງແຜ່ຫຼາຍ ແລະ ມີລັກສະນະເປັນວົງກວ້າງ, ມີລາຄາບໍ່ແພງ ຫຼື ບາງກໍລະນີກໍ່ບໍ່ໄດ້ເສຍຄ່າບໍລິການເລີຍ. ທັງໝົດນີ້ ແນໃສ່ຮັບປະກັນ ການສະໜອງຂໍ້ມູນຂ່າວສານ ກ່ຽວກັບ ຜົນງານ ຂອງ ກປສ ໄດ້ຮັບຊາບ ກັນໃນທົ່ວສັງຄົມ ຢ່າງກ້ວາງຂວາງ.

**ການສື່ສານ ຜ່ານວາລະສານ ແລະ ສິ່ງພິມຕ່າງໆ -** ຫກປສ ເພີ່ມທະວີ ການພັດທະນາສິ່ງພິມ ຂອງຕົນ ເປັນຕົ້ນ ວາລະສານ, ແຜ່ນພັບ, ປຶ້ມຄູ່ມື, ບົດລາຍງານປະຈຳປີ, ປະຕິທິນ ແລະ ອື່ນໆ ເຊິ່ງມີເນື້ອຫາ ແລະ ມີຂໍ້ມູນແຕກຕ່າງກັນຕາມຈຸດປະສົງຂອງແຕ່ລະຢ່າງ ກໍ່ຖືວ່າເປັນເຄື່ອງມືທີ່ສຳຄັນ ແລະ ຈຳເປັນໃນການສື່ສານ ທີ່ສາມາດສື່ສານເຖິງຜົນງານຂອງ ກປສ , ລາຍງານຜົນ ຂອງການຈັດຕັ້ງປະຕິບັດບັນດາໂຄງການທີ່ໄດ້ຮັບທຶນ ຈາກ ກປສ, ສື່ສານກ່ຽວກັບຄວາມອາດສາມາດຂອງ ກປສ, ບັນດາສິ່ງທ້າທາຍທີ່ກຳລັງປະເຊີນຢູ່, ທິດທາງໃນຕໍ່ໜ້າ ແລະ ອື່ນອີກ. ທັງໝົດນີ້ ລ້ວນແຕ່ມີຄວາມສຳຄັນ ໂດຍສະເພາະໃນເວລາຈັດງານວາງສະແດງ, ກອງປະຊຸມເຜີຍແຜ່ ກ່ຽວກັບ ກປສ ແລະ ເນື່ອງໃນໂອກາດງານສຳມະນາ ສ້າງຈິດສຳນຶກຕ່າງໆ, ແຈກຢາຍໃນທຸກໂອກາດທີ່ເໝາະສົມ ເຊັ່ນ: ເນື່ອງໃນງານສຳມະນາ, ກອງປະຊຸມ, ງານວາງສະແດງ ຫຼື ງານສະເຫຼີມສະຫຼອງວັນສຳຄັນຕ່າງໆ.

**ການສື່ສານ ຜ່ານກິດຈະກຳ ນອກສະຖານທີ່, ກັບຊຸມຊົນ, ໂຮງຮຽນ ແລະ ອື່ນໆ**: ຫກປສ ເພີ່ມທະວີ ກິດຈະກຳນອກສະຖານທີ່ ແລະ ຖື ເປັນບັນຫາສຳຄັນ ຍ້ອນມັນມີລັກສະນະພິເສດ ຄືສາມາດຈັດເວລາໃດກໍ່ໄດ້ ແລະ ສະຖານທີ່ໃດກໍ່ໄດ້ ອີງໃສ່ກຸ່ມເປົ້າໝາຍ ແລະ ຄາດໝາຍຂອງກິດຈະກຳນັ້ນໆ ເຊັ່ນ: ໂຮງຮຽນ, ວັດ, ຊຸມຊົນໃດໜຶ່ງ ເພື່ອໃຫ້ກຸ່ມເປົ້າ ໝາຍນັ້ນໆ ໄດ້ມີສ່ວນຮ່ວມ. ຮັບປະກັນ ໃຫ້ກິດຈະກຳໃນລັກສະນະນີ້ ສາມາດດຳເນີນໄດ້ 2-3 ຄັ້ງ ຕໍ່ປີ, ທັງໃນມີທັງນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ.

**ວຽກຈຸດສຸມ 5: ການສື່ສານ ຜ່ານຂະບວນການສຶກສາ ແລະ ການປຸກຈິດສຳນຶກ**

ແຕ່ນີ້ ຮອດປີ 2020 ກປສ ຕ້ອງເພີ່ມທະວີ ການຊຸກຍູ້ສົ່ງເສີມ ການພັດທະນາ ຫຼັກສູດການສຶກສາ ສິ່ງແວດ ລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ໃຫ້ສຳເລັດ ຕາມເປົ້າໝາຍ ດ້ານສິ່ງແວດລ້ອມ ຂອງ ກຊສ ຄື: ໃນໂຮງຮຽນ ອະນຸບານ 3 ຫາ ປະຖົມ ປີ 1 ຮອດປີ 5 ໃຫ້ມີຫຼັກສູດ ກ່ຽວກັບ ສິ່ງແວດລ້ອມພື້ນຖານທົ່ວໄປ (ອາກາດ ແລະ ຊີວະນາໆພັນ); ສ່ວນມັດທະຍົມຕົ້ນ ກ່ຽວກັບ ບັນຫາສິ່ງແວດລ້ອມ ທີ່ພົ້ນເດັ່ນ, ການປ່ຽນແປງດິນຟ້າອາກາດ; ມັດທະຍົມປາຍ ກ່ຽວກັບ ການພັດທະນາແບບຍືນຍົງ ລວມທັງ ສິ່ງແວດລ້ອມຕົວເມືອງ (ການກຳຈັດຂີ້ເຫຍື້ອ, ນ້ຳເປື້ອນ ແລະ ອື່ນໆ) ແລະ ເຊື່ອມຕໍ່ ໃນ

ລະດັບມະຫາວິທະຍາໄລ ທີ່ຄອບຄຸມລົງເລິກ ກ່ຽວກັບ ນະໂຍບາຍ, ສົນທິສັນຍາ, ກົດໝາຍ, ກົນໄກ ແລະ ລະບຽບການ ໃນການຄຸ້ມຄອງ ສິ່ງແວດລ້ອມ.

## 2.6 ແຜນບູລິມະສິດດ້ານການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ

ເພື່ອໃຫ້ມີແຫຼ່ງທຶນຈາກສາກົນ ແລະ ເປັນທຶນສະໜອງໂດຍກົງ ກປສ ຕ້ອງໄດ້ເຮັດພາລະບົດບາດໃນການສ້າງສາຍສຳພັນຮັດແໜ້ນກັບຂະແໜງການຕ່າງໆ ເຊັ່ນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເອງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນໆ. ນອກນີ້ ຍັງຕ້ອງຮັດແໜ້ນສາຍພົວພັນກັບອົງການຈັດຕັ້ງສາກົນ ພາຍໃນປະເທດ, ພາກພື້ນ ແລະ ສາກົນ ເພື່ອສາມາດດຶງດູດທຶນຮອນໃຫ້ແກ່ ກປສ ຢ່າງຕໍ່ເນື່ອງ. ຄຽງຄູ່ກັບການສ້າງສາຍສຳພັນກັບບັນດາອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດນັ້ນ ກປສ ຍັງຕ້ອງໄດ້ຮັກສາສາຍສຳພັນອັນດີທີ່ມີຢູ່ແລ້ວໃຫ້ຍືນຍົງຄົງຕົວ ເຊັ່ນສາຍສຳພັນ ກັບທະນາຄານໂລກ (WB), ສາຍສຳພັນກັບທະນາຄານພັດທະນາອາຊີ (ADB), ສາຍສຳພັນກັບ ກອງທຶນສິ່ງແວດລ້ອມໂລກ Global Environment Facility (GEF), ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ Green Climate Fund (GCF) ແລະ ອົງການຈັດຕັ້ງອື່ນໆ ອີກ.

# *ພາກທີ III ມາດຕະການຈັດຕັ້ງປະຕິບັດ*

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ແຜນດຳເນີນງານດັ່ງກ່າວນີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ກປສ ຕ້ອງຈັດຕັ້ງປະຕິບັດມາດຕະການດຳເນີນງານ ດັ່ງນີ້ :

1. ສ້າງຄວາມເຂັ້ມແຂງ ດ້ານການຈັດຕັ້ງ, ບຸກຄະລາກອນ ແລະ ກົນໄກຄຸ້ມຄອງບໍລິຫານ ຕາມ 8 ດັດສະນີໝາຍດ້ານຄວາມອາດສາມາດ ຂອງ ກປສ;
2. ປັບປຸງກົນໄກການເງິນ ເຊັ່ນ ການປັບປຸງບັນດາຄູ່ມືຂອງ ກປສ, ຍົກຄຸນະພາບ ແລະ ຄວາມເປັນເຈົ້າການຂອງພະນັກງານ ພາຍໃນຫ້ອງການ, ການດຳເນີນ ວິທີການ ປະເມີນວັດຜົນໄດ້ຮັບ ຈາກ ການສະໜອງທຶນ ເພື່ອຈັດຕັ້ງປະຕິບັດໂຄງການຕ່າງໆ ໂດຍການຊີ້ນຳ ແລະ ການຕິດຕາມກວດກາ, ການສ້າງກົນໄກ ໃນການສື່ສານກັບຂະແໜງການຫຼັກ ແລະ ຄູ່ຮ່ວມພັດທະນາ;
3. ຮັບປະກັນຜົນສຳເລັດ ໃນການຈັດຕັ້ງປະຕິບັດທິດທາງຈຸດສຸມ "ໜຶ່ງ ກປສ ໜຶ່ງແຜນ" ເປັນຕົ້ນ: ການເຊື່ອມສານກົນໄກການເງິນ ໃຫ້ສອດຄ່ອງກັບລະບົບວິຊາການ, ກັບລະບົບການຈັດຊື້ຈັດຈ້າງ ແລະ ກັບທຸກລະບົບຂອງ ກປສ;
4. ຮັບປະກັນຜົນສຳເລັດ ໃນການຫັນເປັນ ***"ໜຶ່ງ ກປສ ໜຶ່ງລະບົບ"***, ມີລະບົບການຄຸ້ມຄອງທຶນ, ປະສິດທິຜົນໃນການລົງທຶນ, ການລົງທຶນເງິນກູ້ ແລະ ການນຳໃຊ້ງົບປະມານຕ່າງໆ ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດດຳລັດຂອງ ກປສ, ມີຄວາມຍຸດຕິທຳ, ໂປ່ງໃສ ແລະ ທັນເວລາ. ທຸກຂໍ້ມູນຂ່າວສານ ຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດໂຄງການ ແລະ ຜົນການກວດສອບ ຕ້ອງໄດ້ຮັບການເຜີຍແຜ່ ໃຫ້ແກ່ມວນຊົນ ໂດຍຜ່ານແວບໄຊຂອງ ກປສ ແລະ ຕ້ອງເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ ຕ້ອງມີລະບົບລາຍງານ ດ້ານການເງິນ ໃນທຸກໆ 3 ເດືອນ ແລະ 6 ເດືອນ;

5. ດຳເນີນການປຶກສາຫາລື, ປະສານສົມທົບ, ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານກັບທຸກພາກສ່ວນທີ່ກ່ຽວຂ້ອງ;
6. ດຳເນີນກອງປະຊຸມປຶກສາຫາລືກັບຜູ້ໃຫ້ທຶນ ໃນແຕ່ລະປີ ແລະ ເຊື່ອມໄຫວງານວາງສະແດງຜົນງານຂອງ ກປສ.

# <u>ເອກະສານອ້າງອີງ:</u>


1. ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ປປ ລາວ;
2. ນະໂຍບາຍ ແຫ່ງຊາດ ວ່າດ້ວຍການປະຢັດ ແລະ ອະນຸລັກພະລັງງານ ສະບັບເລກທີ 01/ພບ, ລົງວັນທີ 04/07/2016;
3. ນະໂຍບາຍ ຂອງ ສປປ ລາວ ກ່ຽວກັບ ການພັດທະນາ ຂະແໜງ ໄຟຟ້ານໍ້າຕົກ ແບບຍືນຍົງ ທາງດ້ານ ສິ່ງແວດລ້ອມ ແລະ ສັງຄົມ ສະບັບເລກທີ 561/ຄຜທ, ລົງວັນທີ 04/11/2014;
4. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ (2016-2025) ແລະ ແຜນການ 5 ປີ ຄັ້ງທີ VIII (2016-2020) ດ້ານການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
5. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ (2016-2025) ແລະ ແຜນການ 5 ປີ (2016-2020) ຂອງ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂອງຂະແໜງການອື່ນໆ;
6. ວິໄສທັດ ຮອດປີ 2030, ຍຸດທະສາດ ຮອດປີ 2025 ຂອງ ກປສ;
7. ຍຸດທະສາດສິ່ງແວດລ້ອມແຫ່ງຊາດ **2011 – 2020**;
8. ຍຸດທະສາດການພັດທະນາກະສິກຳ **2011 - 2020 (2010)**;
9. ຍຸດທະສາດການປ່ຽນແປງດິນຟ້າອາກາດ **(2010)**;
10. ຍຸດທະສາດປ່າໄມ້ ຮອດປີ **2020 (2005)**;
11. ຮ່າງນະໂຍບາຍ ແລະ ຍຸດທະສາດ ຊັບພະຍາກອນນໍ້າ **(2013);**
12. ຍຸດທະສາດຊີວະນາໆພັນແຫ່ງຊາດ ຮອດປີ **2020** ແຜນດຳເນີນງານ ປີ **2010 (2004)**;
13. ຍຸດທະສາດການພັດທະນາພະລັງງານທົດແທນ ໃນ ສປປ ລາວ **(2011)**;
14. ຍຸດທະສາດພະລັງງານ ແລະ ການຂຸດຄົ້ນບໍ່ແຮ່ ແຫ່ງຊາດ ຮອດປີ **2020**;
15. ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່ ເລກທີ 26/ຄບສພ, ລົງວັນທີ 3/8/2017**;**
16. ຍຸດທະສາດການທ່ອງທ່ຽວແຫ່ງຊາດ ຮອດປີ **2020**;
17. ບົດລາຍງານກໍລະນີສຶກສາ: ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໃນ ສປປ ລາວ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ກປສ.
18. ບົດລາຍງານການສິ້ນສຸດການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບ, ທະນາຄານໂລກ, ພະຈິກ, 2013
19. ບົດສະຫຼຸບການຈັດຕັ້ງປະຕິບັດແຜນການ ສົກປີ 2011 - 2012 ແລະ ທິດທາງແຜນການ ສົກປີ 2012 - 2013 ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2012);**
20. ບົດສະຫຼຸບການຈັດຕັ້ງປະຕິບັດແຜນການ ສົກປີ 2012 - 2013 ແລະ ທິດທາງແຜນການ ສົກປີ 2013 - 2014 ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2013);**
21. ບົດສະຫຼຸບປະເມີນຜົນກາງສະໄໝ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 ສົກປີ 2011 – 2015 ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ **(2013);**

22. ບົດລາຍງານການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດທີ 7 ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2013);**
23. ແຜນດຳເນີນງານສິ່ງແວດລ້ອມ ແຫ່ງຊາດ ສົກປີ 2011 – 2015 (2012);
24. ແຜນດຳເນີນງານການພັດທະນາກະສິກຳແຫ່ງຊາດ ຮອດປີ **2015**.




**ລວມທັງໝົດທົ່ວປະເທດ 169 ໂຄງການ**
**(ກປສ 121, ຄສລ2 48)**